FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

Impact Energy
Asia Development

# ບົດສະຫຼຸບຫຍໍ້ ຂອງການປະເມີນຜົນ ກະທົບດ້ານສິງແວດລ້ອມ ແລະ ສັງຄົມ

# ໂຄງການພະລັງງານລົມ



FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

***Environmental Resources Management***
*The business of sustainability*

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ພາກສະເໜີ

- ໂຄງການດັ່ງກ່າວນີ້ເປັນໂຄງການພະລັງງານງານລົມຂ້າມຊາຍແດນແຫ່ງທຳອິດ ທີ່ໄດ້ຮັບການອະນຸມັດຈາກລັດຖະບານລາວ ແລະ ລັດຖະບານ ສສ ຫວຽດນາມ ໂດຍອີງຕາມບົດບັນທຶກຄວາມເຂົ້າໃຈໃນການສະໜອງໄຟຟ້າຈາກໂຄງການພະລັງງານລົມຂອງ ສປປ ລາວ ໃຫ້ກັບ ບໍລິສັດໄຟຟ້າຂອງ ສສ ຫວຽດນາມ(EVN).
- ໃນປີ 2011 ບໍລິສັດ Impact Energy Asia Development (IEAD) ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ກັບລັດຖະບານ ສປປ ລາວ ໃນການສຶກສາຄວາມເປັນໄປໄດ້ໃນການພັດທະນາໂຄງການພະລັງງານລົມ
- ໃນປີ 2015 ບໍລິສັດ Impact Energy Asia Development (IEAD) ໄດ້ເຊັນສັນຍາພັດທະນາໂຄງການ (PDA) ກັບລັດຖະບານ ສປປ ລາວ ໃນການການພັດທະນາໂຄງການພະລັງງານລົມ ທີ່ມີກຳລັງການຕິດຕັ້ງ 600 MW
- ເປົ້າໝາຍການເຊັນສັນຍາສຳປະທານກັບລັດຖະບານແຫ່ງ ສປປ ລາວ ພາຍໃນເດືອນ ສິງຫາ-ກັນຍາ ປີ 2022 ແລະ ເລີ່ມການກໍ່ສ້າງພາຍໃນເດືອນ ຕຸລາ ປີ 2022
- ໄລຍະ (The Commercial Operations Date ຫຼື COD ແມ່ນ ເດືອນ ທັນວາ 2025 ໂດຍມີໄລຍະສຳປະທານທັງໝົດ 25 ປີ ນັບຈາກ ມື້ COD.
- ໄລຍະການກໍ່ສ້າງຄາດວ່າຈະໃຊ້ເວລາ 30 ເດືອນ.

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ສະພາບລວມຂອງໂຄງການ

## ອົງປະກອບຂອງໂຄງການ




ລັງການຜະລິດ 600 ເມກາວັດ (600 MW) ເຊິ່ງພື້ນທີ່ໂຄງການສ່ວນໃຫຍ່ແມ່ນນອນຢູ່ໃນຂອບເຂດຂອງເມືອງ ດາກຈຶງ ແຂວງເຊກອງ ແລະອີກບາງສ່ວນແມ່ນນອນຢູ່ໃນຂອບເຂດຂອງເມືອງ ຊານໄຊ ແຂວງອັດຕະປື. ພື້ນທີ່ການສຶກສາໃນການພັດທະນາໄຟຟ້າພະລັງງານລົມ (ບໍ່ລວມເຂດສາຍສົ່ງໄຟຟ້າ) ແມ່ນມີພື້ນທີ່ສຶກສາທັງໝົດ

- ເສົາກັງຫັນລົມ 133 ຕົ້ນ ( ລວງສູງ 110 ແມັດ )
- ສາຍສົ່ງ 500 kV ໄລຍະ 22 ກິໂລແມັດຈາກພື້ນທີ່ໂຄງການ ຫາຊາຍແດນລາວ-ຫວຽດນາມ
- ສາຍໄຟຝັງດິນຈາກເສົາກັງຫັນລົມມາຫາສະຖານີຍ່ອຍ ແລະ ສາຍສົ່ງ 35 kV ແລະ 115 kV ຈາກ ສະຖານີຍ່ອຍ ມາຫາສະຖານີຫຼັກໃນເຂດພື້ນທີ່ໂຄງການ.
- ເສັ້ນທາງເຂົ້າເຖິງ ພ້ອມຮ່ອງລະບາຍນ້ຳ ລວມຄວາມກວ້າງ 8 ແມັດ
- ສິ່ງອຳນວຍຄວາມສະດວກອື່ນໆ ລວມທັງ ສະຖານີ 115 ແລະ 500 kV, ໂຮງປະສົມຄອນກຣີດ (ຊົ່ວຄາວ), ອາຄານຫ້ອງການ, ລານກອງອຸປະກອນ, ແຄັມກຳມະກອນ, ກອງເສດດິນ-ຫີນ ...

## ແຜນດຳເນີນງານຂອງໂຄງການ




FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ສະພາບລວມຂອງໂຄງການ




FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ຂັ້ນຕອນການຮ້ອງທຸກຂອງຊຸມຊົນ

**ບາດກ້າວທີ 1:** ຮັບຄໍາຮ້ອງທຸກ

**ບາດກ້າວທີ 2:** ປະເມີນຄໍາຮ້ອງທຸກ, ກໍານົດບຸລິມະສິດ ແລະ ໜ້າທີ່ຮັບຜິດຊອບ

**ບາດກ້າວທີ 3:** ຄົ້ນຄວ້າ ແລະ ສະເໜີວິທີແກ້ໄຂ (ພາຍໃນ 14 ມື້)

**ບາດກ້າວທີ 4:** ຖ້າຫາກຜູ້ຮ້ອງທຸກບໍ່ຍອມ ຮັບວິທີແກ້ໄຂທີ່ສະເໜີ

**ບາດກ້າວທີ 5:** ດໍາເນີນການແກ້ໄຂ

**ບາດກ້າວທີ 6:** ສໍາເລັດການແກ້ໄຂຂໍ້ຮ້ອງທຸກ ແລະ ເອກະສານຢັ້ງຢືນ

ຈຸດປະສົງຂອງກົນໄກແມ່ນເພື່ອຮັບປະກັນວ່າການທົດແທນຈະມີຄວາມໜັກແໜ້ນ ແລະ ໂປ່ງໃສ ເພື່ອແກ້ໄຂຂໍ້ຮ້ອງທຸກຂອງປະຊາຊົນ. ແຜນການດັ່ງກ່າວປະກອບດ້ວຍແນວທາງການແກ້ໄຂບັນຫາ 3 ຂັ້ນ (ບ້ານ, ເມືອງ ແລະ ແຂວງ). ຖ້າຫາກຂໍ້ຮ້ອງທຸກຂອງປະຊາຊົນບໍ່ໄດ້ຮັບການແກ້ໄຂໃນຂັ້ນຕົ້ນ ກໍ່ຈຳເປັນຕ້ອງມີການແກ້ໄຂໃນຂັ້ນຕໍ່ໄປ

## ກົນໄກການແກ້ໄຂຂໍ້ຮ້ອງທຸກ




FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ສະພາບໂດຍລວມຂອງບັນດາບ້ານທີ່ໄດ້ຮັບຜົນກະທົບ

| ບ້ານ | ຜົນກະທົບ | | | |
|---|---|---|---|---|
| | ຈຳນວນ ຄຄ ທີ່ ຖືກກະທົບ | ປ່າຊ້າ / ປ່າຊຸມ ຊຶນ/ເຂດຊືອ່ະ ນາງພັນ | ເງົາກະພົບ | ທັດສະນີຍະພາບ |
| ດາກຈຶງ, ເຊກອງ | | | | |
| ດາກຕຽມ | 23 | | ປານກາງ | ປານກາງ |
| ດາກເຊັງ | 4 | | | |
| ຊຽງ | 9 | | | |
| ດາກເຕຣີບ | 38 | | | |
| ປຣາວ | 0 | ໃກ້ກັບພູກຸ້ງກີ້ງ | | |
| ດາກກັງ | 5 | ໃກ້ກັບພູກຸ້ງກີ້ງ | | |
| ດາກເດັນ | 46 | ໃກ້ກັບພູກຸ້ງກີງ | | |
| ດາກດໍຣ | 31 | | | |
| ດາກຈຶງ | 2 | | | ປານກາງ |
| ງອນດອນ | 30 | | | |
| ດາກມອນ | 31 | | | |
| ດາກບອງ | 109 | ສາຍສົ່ງຜ່ານ ປ່າຊ້າ | ປານກາງ | |
| ຊານໄຊ, ອັດຕະປື | | | | |
| ດາກນົງ | 19 | | ປານກາງ | |
| ດາກສະໝໍ | 9 | | | |
| ດາກຍົກ | 4 | | | |

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ດາກຕຽມ, ດາກເຊັງ, ຊຽງຫຼວງ, ດາກເຕີບ




FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ດາກກັງ ແລະ ບ້ານປຣາວ




FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ດາກຣັນ,ດາກບອງ, ດາກຈຶງ, ງອນດອນ, ດາກມວນ




FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ດາກດໍ, ດາກນົງ, ດາກສະໝໍ, ດາກຢົກ




FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ຜົນກະທົບສິ່ງແວດລ້ອມ ແລະ ມາດຕະການຫຼຸດຜ່ອນ

**ຜົນກະທົບຕໍ່ດິນ ແລະ ທໍລະນີວິທະຍາ -**

ວາງແຜນວຽກກ່ຽວກັບວຽກດິນໄວ້ໃນຊ່ວງລະດູແລ້ງ ແລະ ໃຫ້ຫຼີກລ່ຽງໃນຊ່ວງລະດູຝົນ ຖ້າເປັນໄປໄດ້.

ການຈັດເກັບວັດສະດຸກໍ່ສ້າງ ຄວນຈະຫ່າງຈາກແມ່ນ້ຳ ແລະ ສາຍນ້ຳ ຢ່າງໜ້ອຍ 30 ແມັດ.

ມີການກວດສອບໃຫ້ໝັ້ນໃຈວ່າ ວັດສະດຸກໍ່ສ້າງຖືກຈັດເກັບໄວ້ໃນພື້ນທີ່ ທີ່ກໍານົດ ແລະ ບໍ່ກີດຂວາງ ຫຼື ຢູ່ໃນບໍລິເວນຂອບເຂດທີ່ມີຄວາມສ່ຽງຕໍ່ການເກີດການເຊາະເຈື່ອນຂອງດິນ.

ດໍາເນີນການຕິດຕາມ / ກວດກາ ເພື່ອກວດສອບຄວບຄຸມການເຊາະເຈື່ອນຂອງດິນ.

**ຜົນກະທົບຕໍ່ຄຸນນະພາບອາກາດ –**

ດໍາເນີນການຕິດຕາມກວດກາຄຸນນະພາບອາກາດ.

ຫຼຸດຜ່ອນຄວາມໄວການສັນຈອນຂອງຍານພາຫະນະທີ່ເຂົ້າ-ອອກຈາກໝູ່ບ້ານ ທີ່ໄດ້ຮັບຜົນກະທົບ ໂດຍຈໍາກັດຄວາມໄວຢູ່ທີ່ 30 ກມ/ຊມ.

ເສັ້ນທາງການສັນຈອນຄວນປູຢາງ, ຖ້າຫາກບໍ່ໄດ້ປູຢາງຄວນຫົດນໍ້າຢ່າງໜ້ອຍ 2 ຄັ້ງ/ມື້

**ຜົນກະທົບຕໍ່ພູມສັນຖານ -**

ມີການປ້ອງກັນຈຸດທີ່ມີຄວາມຄ້ອຍຊັນທີ່ເໝາະສົມ ແລະ ຄວບຄຸມການລະບາຍນໍ້າ.

ການບຸກເບີກໜ້າດິນ ຫຼື ຕັດຕົ້ນໄມ້ ສະເພາະໃນພື້ນທີ່ໂຄງການ/ພື້ນທີ່ສໍາປະທານເທົ່ານັ້ນ,

ຫຼັງຈາກສໍາເລັດການກໍ່ສ້າງ, ໃຫ້ທໍາການຟື້ນຟູພື້ນທີ່ ແລະ ທິວທັດ ໃຫ້ກັບຄືນສູ່ລັກສະນະເດີມເທົ່າທີ່ເປັນໄປໄດ້.



**ຜົນກະທົບຕໍ່ ຄຸນນະພາບນໍ້າໜ້າດິນ / ຊັບພະຍາກອນນໍ້າ -**

ມີແຜນການຈັດການການລະບາຍນໍ້າ ທີ່ລວມທັງການຜັນຜ່ຽນແລວການໄຫຼຂອງນໍ້າສະອາດ ອອກຈາກ “ສິ່ງເປິເປື້ອນ” ຫຼື ພື້ນທີ່ທີ່ຖືກລົບກວນ, ກັກເກັບ, ບໍາບັດ ແລະ ການນໍາເອົານໍ້າເປື້ອນມາໃຊ້ຄືນໃໝ່ຈາກໂຮງງານປະສົມປູນ

ມີການກະກຽມ ແລະ ດໍາເນີນການແຜນການໃຊ້ນໍ້າ. ເຊິ່ງແຜນດັ່ງກ່າວຕ້ອງປຶກສາຫາລື ແລະ ຕົກລົງກັບຊາວບ້ານ, ຫ້ອງການກ່ຽວຂ້ອງຂອງເມືອງ ແລະ ແຂວງກ່ອນ.

ດໍາເນີນການຕິດຕາມກວດກາຄຸນນະພາບນໍ້າໜ້າດິນກ່ອນການກໍ່ສ້າງ (ເກັບຕົວຢ່າງ 5 ຈຸດ) ຈຸດດຽວກັນກັບຈຸດເກັບຕົວຢ່າງນໍ້າໜ້າດິນໃນການເກັບຂໍ້ມູນພື້ນຖານສິ່ງແວດລ້ອມກ່ອນໜ້ານີ້.

**ຜົນກະທົບຕໍ່ ສຽງມັນ –**

- ເສົາກັງຫັນລົມທຸກຕົ້ນທີ່ສົ່ງຜົນກະທົບຮູນແຮງຕໍ່ປະຊາຊົນຈະຖືກຍ້າຍ
- ດໍາເນີນການຕິດຕາມກວດກາຄຸນະພາບສຽງມັນຕາມທີ່ໄດກໍານົດໃນບົດລາຍງານ EIA ທີ່ຖືກຮັບຮອງ
- ຫຼີກເວັ້ນສຽງລົບກວນທີ່ບໍ່ຈໍາເປັນຈາກກິດຈະກໍາການເຮັດວຽກຂອງເຄື່ອງຈັກ, ການຂັບຂີ່ຍານພາຫານະໄວເກີນໄປ.

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ເງົາກະພິບ



- ເງົາກະພິບຈາກແສງແດດ ເກີດຈາກໃບພັດກັງຫັນລົມທີ່ໝູນຢູ່ ສາມາດເຮັດໃຫ້ເກີດເງົາຜ່ານຊ່ອງແຄບໄດ້ເຊັ່ນ: ປ່ອງຢ້ຽມຂອງເຮືອນທີ່ໃກ້ຄຽງ.
- ຜົນກະທົບຈາກຊ່ວງດຳເນີນງານ ອາດກໍ່ໃຫ້ເກີດຄວາມລຳຄານໄດ້.
- ໄດ້ເຮັດແບບຈຳລອງ ໃນບົດລາຍງານ ESIA ສຳລັບໝູ່ບ້ານທີ່ອາດໄດ້ຮັບຜົນກະທົບຈາກເງົາກະພິບເຊັ່ນ: ດາກຕຽມ, ດາກແຢນ, ດາກບອງ ແລະ ດາກນົງ





## ມາດຕະການຫຼຸດຜ່ອນ

- ໃນຊ່ວງທີ່ກຽມບົດລາຍງານ ESIA, ກັງຫັນລົມຕົ້ນ ທີ່ມີບັນຫາຜົນກະທົບຈາກເງົາກະພິບທີ່ສຳຄັນຈະໄດ້ຍ້າຍອອກຈາກເຂດຊຸມຊົນ.
- ກັງຫັນລົມທຸກຕົ້ນແມ່ນໄດ້ຮັບຈັດວາງຕາມແນວທາງຂອງ ທະນາຄານໂລກ/IFC ເພື່ອໃຫ້ມີຄວາມແນ່ໃຈວ່າການເກີດເງົາກະພິບຈະຕ່ຳກ່ວາ 30 ຊົ່ວໂມງ/ປີ ເຊິ່ງຈະສົ່ງຜົນຕໍ່ພື້ນທີ່ທີ່ມີຄວາມອ່ອນໄຫວໜ້ອຍທີ່ສຸດ.
- ການຕິດຕາມ ແລະ ລາຍງານຂໍ້ຮ້ອງທຸກ - ໃຫ້ມີການກວດສອບຢ່າງໃກ້ຊິດກັບຜູ້ທີ່ຢູ່ອາໄສ ໃນຊ່ວງດຳເນີນງານ, ເຊິ່ງມີການຄາດການວ່າຜົນກະທົບຈາກເງົາກະພິບ ໃນສະຖານທີ່ນັ້ນໆ ຈະໄດ້ຮັບການສະຫຼຸບ ຈາກຜູ້ສະເໜີໂຄງການ ແລະ ຈັດສັນໄວ້ສຳລັບກໍ່ສ້າງ.

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT



# ຮູບພາບຕັດຕໍ່ຫຼັງຈາກກໍ່ສ້າງເສົາກັງຫັນລົມ – ບ. ດາກຕຽມ













FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ຜົນກະທົບດ້ານທັດສະນີຍະພາບ







## ຮູບພາບຕັດຕໍ່ຫຼັງຈາກກໍ່ສ້າງເສົາກັງຫັນລົມ – ບ. ດາກແຢນ

- ພື້ນທີ່ລານອຸປະກອນ ແລະ ແຄ້ມຄົນງານກໍ່ສ້າງ ຕັ້ງຢູ່ພື້ນທີ່ທີ່ຖືກລົບກວນ ຫຼື ບໍ່ມີການປົກຫຸ້ມຂອງພັນພືດຢູ່ແລ້ວ.
- ຫຼຸດຜ່ອນແສງໄຟໃນເວລາກາງຄືນ ມີການຮັບປະກັນໃຫ້ແນ່ໃຈວ່າມີຄວາມປອດໄພ.
- ນຳໃຊ້ວັດສະດຸຫຼຸດແສງສະທ້ອນ ແລະ ຄວນໃຊ້ສຳລັບອຸປະກອນທັງໝົດຂອງໂຄງການ.
- ຮັກສາພືດພັນທີ່ມີຢູ່ດັ້ງເດີມໃຫ້ດີທີ່ສຸດ, ລວມເຖິງພືດພັນທີ່ຢູ່ຕາມເສັ້ນທາງ ແລະ ໂຄງສ້າງພື້ນຖານອື່ນໆ ຂອງໂຄງການ.



FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ຜົນກະທົບຕໍ່ຄວາມຫຼາກຫຼາຍທາງຊີວະພາບ ແລະ ມາດຕະການ

## ການທຳລາຍທາງກາຍະພາບ ແລະ/ຫຼື ຜົນກະທົບຈາກການລົບກວນພືດພັນ

ການກຳນົດເສັ້ນທາງເຂົ້າໃໝ່ ໃນຊ່ວງກ່ອນກໍ່ສ້າງ ຕ້ອງທຳການສຳຫຼວດກ່ອນ ໂດຍນັກນິເວດວິທະຍາ, ໂດຍສະເພາະເຂດທີ່ມີຄວາມຫຼາກຫຼາຍທາງຊີວະນາໆພັນ ທີ່ມີອ່ອນໄຫວ ແລະ ໄວຕໍ່ການຣົບກວນ.

ຫຼີກລ່ຽງການຕັ້ງແຄ້ມກໍ່ສ້າງ ແລະ ສາງເກັບວັດສະດຸ/ອຸປະກອນ ພາຍໃນ ຫຼື ໃກ້ພື້ນທີ່ປ່າທີ່ຈັດເຮັດແຜນທີ່ໄວ້.

## ການສູນເສຍແຫຼ່ງທີ່ຢູ່ອາໄສ ເພື່ອຮອງຮັບຜົນກະທົບຂອງສາຍພັນຫຼັກ -

ການບຸກເບີກພື້ນທີ່ ກ່ອນການກໍ່ສ້າງ ເພື່ອໄລ່ສັດປ່າອອກຈາກແຫຼ່ງທີ່ຢູ່ອາໄສ ເຊິ່ງສັດປ່າອາດໄດ້ຮັບຜົນກະທົບໂດຍກົງ.

ວາງກຳນົດການກິດຈະກຳບຸກເບີກໜ້າດິນ, ເກດດິນ ແລະ ການກໍ່ສ້າງທາງນອກຊ່ວງເວລາປະສົມພັນ ກັບສາຍພັນພືດທີ່ຮັບຮູ້ໃນເວລານັ້ນ.

## ການລ່າສັດ/ການຮຸກຮານຢ່າງຜິດກົດໝາຍ ແລະ ການນຳໃຊ້ຊັບພະຍາກອນປ່າໄມ້

ກິດຈະກຳທີ່ຜິດກົດໝາຍເຊັ່ນ: ການລ່າສັດປ່າ ຫຼື ການເກັບພັນໄມ້ປ່າ ແລະ ການນຳໃຊ້ຊັບພະຍາກອນປ່າໄມ້ ຕ້ອງມີການກຳນົດລະບຽບກັບຄົນງານກໍ່ສ້າງ ແລະ ຫ້າມເຮັດກິດຈະກຳດັ່ງກ່າວ.

ມີການຄວບຄຸມການເຂົ້າເຖິງພື້ນທີ່ ທີ່ມີຄວາມອ່ອນໄຫວສູງ (ເຊັ່ນ: ເຂດຈະເລີນເຕີບໂຕທີ່ເກົ່າແກ່, ພື້ນທີ່ປ່າໄມ້ທີ່ໄດ້ຮັບຜົນກະທົບ)



## ນົກ ແລະ ເຈຍ ປະທະກັບກັງຫັນລົມອາດເຮັດໃຫ້ບາດເຈັບ ແລະ ເສຍຊີວິດ

ຈັດຕັ້ງປະຕິບັດແຜນການຕິດຕາມກວດກາ ແນໃສ່ກວດສອບການເສຍຊີວິດໃນຊ່ວງທີ່ ນົກ/ເຈຍ ເຮັດກິດຈະກຳເພີ່ມຕື່ມ (ໃນຊ່ວງລະດູການທີ່ກ່ຽວຂ້ອງ).

ຈັດຕັ້ງປະຕິບັດຕິດຕາມກວດສອບການດຳເນີນງານ ເພື່ອຢັ້ງຢືນຜົນກະທົບຈາກການດຳເນີນງານ ແລະ ແຈ້ງການທາງເລືອກໃນການຫຼຸດຜ່ອນຜົນກະທົບທີ່ເໝາະສົມ.

ຈັດກຽມແບບແຜນການປັບໂຕ ເພື່ອລາຍງານຕິດຕາມກວດກາ ຊາກສົບ ນົກ/ເຈຍ ໃນໄລຍະຍາວ, ເພື່ອພິຈາລະນາວ່າ ຈຳເປັນຕ້ອງມີມາດຕະການຫຼຸດຜ່ອນເພີ່ມເຕີມບໍ ສຳລັບກັງຫັນລົມ/ກຸ່ມກັງຫັນລົມສະເພາະເຈາະຈົງ.

ປັບປຸງແຫຼ່ງທີ່ຢູ່ອາໄສຂອງເຈຍ (ເຊັ່ນ: ການສ້າງອ່າງນ້ຳ) ແລະ ຈັດຫາກ່ອງໄມ້ ພາຍໃຕ້ການຄວບຄຸມຂອງ IEAD ໂດຍຫ່າງຈາກກັງຫັນລົມ, ເຊິ່ງອາດຊ່ວຍຫຼຸດຈຳນວນເຈຍໃນພື້ນທີ່ເຂດກັງຫັນລົມ ແລະ ຫຼຸດຄວາມສ່ຽງໃນຊຸມຊົນ.





FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ຜົນກະທົບທາງສັງຄົມ ແລະ ມາດຕະການຫຼຸດຜ່ອນ

## ຜົນກະທົບຕໍ່ສຸຂະພາບ ແລະ ຄວາມປອດໄພຂອງຊຸມຊົນ

ມີການຈັດເຮັດແຜນຄຸ້ມຄອງສິ່ງແວດລ້ອມ ເຊັ່ນ: ແຜນການຈັດການຈໍລະຈອນ, ແຜນການຈັດການຄຸນນະພາບອາກາດ ແລະ ແຜນການຈັດການສຽງ ແລະ ການສັ່ນສະເທືອນ.

## ຜົນກະທົບຕໍ່ໂອກາດທາງເສດຖະກິດ

- ການຈ້າງງານ ແລະ ການເສີມສ້າງຄວາມເຂັ້ມແຂງທ້ອງຖິ່ນ.
- ການສະໜອງໄຟຟ້າໃຫ້ຊົນນະບົດ ແລະ ການພັດທະນາຊຸມຊົນ.
- ຄວາມເປັນໄປໄດ້ໃນການເຂົ້າເຖິງພື້ນທີ່ໃໝ່ຈາກຖະໜົນເສັ້ນໃໝ່.

## ຜົນກະທົບຕໍ່ການດໍາເນີນງານຂອງພະລັງງານລົມ ຕໍ່ສິ່ງອໍານວຍຄວາມສະດວກໃນທ້ອງຖິ່ນ

ມີການຕິດຕາມກວດກາສຽງລົບກວນເປັນປະຈໍາ ໃນກໍລະນີທີ່ສຽງລົບກວນເກີນເກນທີ່ວາງໄວ້.

ຈັດກຽມແຜນການຈັດການຟື້ນຟູ ລວມເຖິງ ການປູກຕົ້ນໄມ້ພັນພື້ນເມືອງໃໝ່, ການຈັດສວນ ແລະ ການຟື້ນຟູພື້ນທີ່ກໍ່ສ້າງ.

## ຜົນກະທົບຕໍ່ມໍລະດົກທາງວັດທະນະທໍາ (ຈັບຕ້ອງໄດ້ ແລະ ຈັບຕ້ອງບໍ່ໄດ້)

- ການວາງແຜນຜັງແລວທາງເຂົ້າໃຫ້ຫຼີກລ່ຽງພື້ນທີ່ປ່າສັກສິດທີ່ຮູ້ຈັກ.
- ຈັດຕຽມ ແຜນຄຸ້ມຄອງມໍລະດົກທາງວັດທະນະທໍາ ເພື່ອເປັນແນວທາງແກ່ຄົນງານກໍ່ສ້າງ ໃນການຄຸ້ມຄອງແຫຼ່ງມໍລະດົກທາງວັດທະນະທໍາ, ໂຄງສ້າງ ແລະ ຄ່ານິຍົມ. ທີ່ອາດໄດ້ຮັບຜົນກະທົບຈາກໂຄງການ.

## ຜົນກະທົບກ່ຽວກັບການຫຼັ່ງໄຫຼເຂົ້າມາໃນພື້ນທີ່

ແຜນການຄຸ້ມຄອງການຫຼັ່ງໄຫຼເຂົ້າມາຂອງແຮງງານກໍາມະກອນ, ແຜນການຄຸ້ມຄອງ ສຸຂະພາບ ແລະ ຄວາມປອດໄພ, ກົດລະບຽບຂອງຜູ້ອອກແຮງງານ ແມ່ນຕ້ອງຈັດຕັ້ງປະຕິບັດເພື່ອຕອບສະໜອງການຍ້າຍເຂົ້າມາຂອງຄົນງານ



## ຕຽມແຜນການມີສ່ວນຮ່ວມຂອງຜູ້ທີ່ມີສ່ວນກ່ຽວຂ້ອງ ແລະ ຂະບວນການຮ້ອງທຸກ

## ຜົນກະທົບຕໍ່ກຸ່ມຊົນເຜົ່າ

- ຜົນກະທົບດ້ານສັງຄົມ ຈະບໍ່ສົ່ງຜົນກະທົບຕໍ່ສັດສ່ວນກຸ່ມຊົນເຜົ່າພຽງກຸ່ມດຽວ ເຊັ່ນ: ຕຣຽງ, ກາຕູ ແລະ ຮ່າຮັກ.
- ແຜນຄຸ້ມຄອງກຸ່ມຊົນເຜົ່າ (ແມ່ນລວມຢູ່ໃນແຜນພັດທະນາຊຸມຊົນ).

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT



# ພາບລວມຜົນກະທົບຈາກການເວນຄືນກຳມະສິດ

| ລ/ດ | ທີ່ຕັ້ງ | ກິດຈະກຳຂອງໂຄງການ | ການຫຼຸດລົງຂອງພື້ນທີ່ກະສິກຳ | | | | | |
|---|---|---|---|---|---|---|---|---|
| | | | ເນື້ອທີ່ຜົນກະທົບ (ຮຕ) | | ຈຳນວນຄົວເຮືອນທີ່ໄດ້ຮັບຜົນກະທົບ (ຄຮ) | | | ຈຳນວນຄົວເຮືອນທີ່ໄດ້ຮັບຜົນກະທົບທັງໝົດ (ຄຮ) |
| | | | ຖວ. | ຊຄ. | ຖວ. | ຖວ & ຊຄ. | ຊຄ. | |
| ເມືອງ ດາກຈຶງ, ແຂວງ ເຊກອງ | | | | | | | | |
| 1. | ດາກດຽມ | ເຂດເສົາກັງຫັນລົມ, ເສັ້ນທາງ | 2.69 | 10.69 | 2 | 19 | 2 | 23 |
| 2. | ດາກເຊັງ | ເສັ້ນທາງ | 0.18 | 0.45 | - | 4 | - | 4 |
| 3. | ດາກຢາງ | ເຂດເສົາກັງຫັນລົມ, ເສັ້ນທາງ | 0.61 | 1.04 | - | 4 | - | 4 |
| 4. | ດາກແຢນ | ເຂດເສົາກັງຫັນລົມ, ເສັ້ນທາງ | 0.56 | 1.33 | - | 4 | 1 | 5 |
| 5. | ຊຽງຫຼວງ | ເສັ້ນທາງ | 0.73 | 1.65 | - | 9 | - | 9 |
| 6. | ດາກເຕຣິບ | ເສົາສາຍສົ່ງ 115kV | 0.05 | 5.24 | - | 12 | 26 | 38 |
| 7. | ຕຣ໋ອງເມືອງ | ເສົາສາຍສົ່ງ 115kV | 0.01 | 1.59 | - | 2 | 3 | 5 |
| 8. | ດາກດໍ | ເສົາສາຍສົ່ງ 115kV | 1.35 | 7.61 | 1 | 14 | 16 | 31 |
| 9. | ດາກເດັນ | ເຂດເສົາກັງຫັນລົມ, ເສັ້ນທາງ | 0.34 | 0.93 | - | 5 | - | 5 |
| 10. | ດາກຣັນ | ເຂດເສົາກັງຫັນລົມ, ເສັ້ນທາງ, ເສົາສາຍສົ່ງ 115kV, ສະຖານີສາຍສົ່ງ 500kV | 5.59 | 24.44 | 1 | 24 | 21 | 46 |
| 11. | ດາກຈຶງ | ເສັ້ນທາງ | 0.19 | 0.41 | - | 2 | - | 2 |
| 12. | ດາກເຣິນ | ເສັ້ນທາງ | 0.32 | 0.76 | - | 4 | 1 | 5 |
| 13. | ດາກກັງ | ເຂດເສົາກັງຫັນລົມ, ເສັ້ນທາງ, ເສົາສາຍສົ່ງ 35 kV | 0.76 | 1.43 | - | 5 | - | 5 |
| 14. | ດາກໂຈມ | ເສັ້ນທາງ | 0.04 | 0.21 | - | 1 | - | 1 |
| 15. | ດາກບອງ | ເສົາສາຍສົ່ງ 115kV, 35kV, ແລວສາຍສົ່ງ 500kV | 20.87 | 51.13 | 4 | 49 | 57 | 110 |
| 16. | ດາກມອນ | ແລວສາຍສົ່ງ 500kV | 0.08 | 16.91 | - | 5 | 26 | 31 |
| 17. | ໂນນສະຫວັນ | ແລວສາຍສົ່ງ 500kV | 0.02 | 2.23 | - | 1 | 3 | 4 |
| 18. | ງອນດອນ | ແລວສາຍສົ່ງ 500kV | 0.11 | 25.62 | - | 8 | 22 | 30 |
| 19. | ດາກຕະອອກນ້ອຍ | ແລວສາຍສົ່ງ 500kV | 0.04 | 5.30 | - | 2 | - | 2 |
| | **ລວມ** | | **34.52** | **158.97** | **8** | **174** | **178** | **360** |
| ເມືອງ ຊານໄຊ, ແຂວງ ອັດຕະປື | | | | | | | | |
| 1. | ດາກນຶງ | ເສົາສາຍສົ່ງ 115kV, ເຂດເສົາກັງຫັນລົມ, ເສັ້ນທາງ | 2.11 | 5.26 | - | 18 | 1 | 19 |
| 2. | ດາກສະມ໌ | ເຂດເສົາກັງຫັນລົມ, ເສັ້ນທາງ | 0.97 | 1.43 | 3 | 6 | - | 9 |
| 3. | ດາກຍົກ | ເຂດເສົາກັງຫັນລົມ, ເສັ້ນທາງ | 1.12 | 3.32 | - | 4 | - | 4 |

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT



## ຜົນກະທົບຕໍ່ ການເກັບເຄື່ອງປ່າຂອງດົງ (NTFP) ໃນພື້ນທີ່

ການນໍາໃຊ້ທີ່ດິນຂອງໂຄງການ ຈະສົ່ງຜົນໃຫ້ສູນເສຍເນື້ອທີ່ໃນການເກັບເຄື່ອງປ່າຂອງດົງແບບຖາວອນ 153 ເຮັກຕາ ແລະ ສູນເສຍພື້ນທີ່ເກັບເຄື່ອງປ່າຂອງດົງຊົ່ວຄາວ 440* ເຮັກຕາ. ການຖາງປ່າຖາວອນ ແລະ ຊົ່ວຄາວ ໄດ້ຖືກຈໍາກັດໄວ້ໃຫ້ໜ້ອຍທີ່ສຸດ ແລະ ກວມເອົາໜ້ອຍກວ່າ 1% ຂອງເນື້ອທີ່ທັງໝົດຂອງໂຄງການ. ພື້ນທີ່ປ່າໄມ້ຈະຖືກຕັດ, ໃນບັນດາສິ່ງອື່ນໆ, ອະນຸຍາດໃຫ້ມີເສັ້ນທາງເຂົ້າເຖິງ. ເສັ້ນທາງ ດັ່ງກ່າວຈະເຮັດໃຫ້ເຂົ້າເຖິງ ພື້ນທີ່ ປ່າອື່ນໆ ໄດ້ຫຼາຍຂຶ້ນ ຊຶ່ງຊາວບ້ານ ທີ່ໄດ້ຮັບ ຜົລກະທົບ ໃນເວລານີ້ອາດບໍ່ສາມາດ ເຂົ້າໄປໄດ້ ຫຼື ມີຄວາມຫຍຸ້ງຍາກ ໃນການເຂົ້າເຖິງ. ໃນຂະນະທີ່ມີ 2,107 ຄົວເຮືອນທີ່ໄດ້ຮັບຜົນກະທົບຈາກການຖາງປ່າ, **ໂຄງການຈະບໍ່ກໍາຈັດຄວາມສາມາດໃນກິດຈະກໍາການເກັບເຄື່ອງປ່າຂອງດົງ.**

**ຮູບພາບອາດມີການປ່ຽນແປງຕາມຜົນລັບ (DMS) ຂອງຮູບແບບໂຄງການ*

# ມາດຕະການຫຼຸດຜ່ອນ

### ການປັບປຸງປະສິດຕິພາບຂອງແຜນຜັງຂອງໂຄງການ

ທາງໂຄງການໄດ້ຫຼຸດຈໍານວນເສົາກັງຫັນລົມລົງຈາກ 148 ຕົ້ນ ເຫຼືອຢູ່ 133 ຕົ້ນ. ນອກຈາກນີ້, ທາງໂຄງການຍັງໄດ້ປັບປຸງແລວ ແລະ ເສົາສາຍສົ່ງ, ເສັ້ນທາງ ເພື່ອຫຼີກລ່ຽງຜົນກະທົບຕໍ່ເຮືອນທີ່ຢູ່ອາໄສ, ປ່າສັກສິດ ແລະ ດິນກະສິກໍາ. ເທົ່າທີ່ເປັນໄປໄດ້.

### ແຜນການຍົກຍ້າຍຈັດສັນ

ແຜນການຍົກຍ້າຍຈັດສັນ ແມ່ນໄດ້ພັດທະນາເພື່ອຕອບສະໜອງຮອງຮັບສໍາລັບໂຄງການ ທີ່ອາດກໍ່ໃຫ້ເກີດການຍ້າຍຖິ່ນຖານທາງເສດຖະກິດ ແລະ ສົ່ງຜົນກະທົບຕໍ່ການດໍາລົງຊີວິດ. ແຜນການຍົກຍ້າຍຈັດສັນ ແມ່ນເພື່ອໃຫ້ແນ່ໃຈວ່າ ການດໍາລົງຊີວິດຂອງຜູ້ຄົນທີ່ຍ້າຍຖິ່ນຖານໄປຈະດີຂຶ້ນ ຫຼື ຢ່າງໜ້ອຍທຽບເທົ່າກ່ອນມີໂຄງການ ແລະ ມາດຕະຖານຊີວິດການເປັນຢູ່ຂອງກຸ່ມຜູ້ທີ່ມີຄວາມອ່ອນໄຫວທີ່ຍ້າຍຖິ່ນຖານ ກໍໄດ້ຮັບການປັບປຸງໃຫ້ດີຂຶ້ນ.

### ການປັບປຸງແຜນຜັງຂອງໂຄງການໃຫ້ເໝາະສົມທີ່ສຸດ




FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT



## ບ.ປຣາວ, ບ.ດາກກັງ, ບ.ດາກເຣີນ ແລະ ບ. ດາກຣັນ

### ພູກຸງກິງ

ໃນນັ້ນປະກອບມີເສົາກັງຫັນລົມ 8 ເສົາ, ແລວ ແລະ ເສົາສາຍສົ່ງ, ເສັ້ນທາງ ເຊິ່ງຈະພັດທະນາໃນເຂດພູກຸງກິງ. ມີຄວາມເຊື່ອທ້ອງຖິ່ນວ່າ ໃນເຂດປ່າແຫ່ງນີ້ເປັນທີ່ຢູ່ອາໄສຂອງວິນຍານ ເຊິ່ງມີຊື່ວ່າ ຜີບັງບົດ ເຊິ່ງສາມາດກໍ່ໃຫ້ເກີດໂລກໄພໄຂ້ເຈັບ ຕໍ່ຜູ້ທີ່ລຸກລ້ຳເຂົ້າໄປໃນເຂດປ່າໂດຍບໍ່ໄດ້ຮັບອະນຸຍາດ.

- ຕ້ອງເຮັດພິທີຕາມຮີດຄອງປະເພນີທ້ອງຖິ່ນ.
- ທາງໂຄງການຕ້ອງມີການຈຳກັດການບຸກເບີກໜ້າດິນ ແລະ ປະຕິບັດຕາມກົດລະບຽບ ແລະ ແຜນການຮັບມືຄວາມຫຼາກຫຼາຍທາງຊີວະນາງພັນ. ສະນັ້ນ, ທາງໂຄງການຈະບໍ່ໄປລົບກວນປ່າທີ່ມີວິນຍານຮ້າຍອາໄສຢູ່




## ບ້ານ ດາກບອງ




ຂອບເຂດແລວສະຫງວນຂອງສາຍສົ່ງ 70 ແມັດໄດ້ຜ່ານປ່າສັກສິດ ບ້ານ ດາກບອງ, ສະນັ້ນ ຈຶ່ງບໍ່ມີການດັດແປງໃດໆ (ເຊັ່ນ: ການບຸກເບີກປ່າໄມ້ ແລະ ໜ້າດິນ) ໃນເຂດພື້ນທີ່ປ່າສັກສິດ.

ທາງໂຄງການຕ້ອງຈັດຕັ້ງປະຕິບັດປຶກສາຫາລືເພີ່ມເຕີມກັບຊາວບ້ານດາກບອງ ແລະ ປະຕິບັດຕາມຮີດຄອງປະເພນີ ເຮັດພິທີທາງສາດສະໜາ ຕາມຄຳຮຽກຮ້ອງຂອງຊາວບ້ານ ເພື່ອທີ່ຈະເຂົ້າໄປ ແລະ ດຳເນີນກິດຈະກຳໂຄງການ

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ແຜນການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້ສ່ວນເສຍຈາກໂຄງການ (SEP)



## ຜູ້ທີ່ມີສ່ວນກ່ຽວຂ້ອງຈາກໂຄງການ

- ປະຊາຊົນທີ່ໄດ້ຮັບຜົນກະທົບ
- ປະຊາຊົນທີ່ໄດ້ຮັບຜົນກະທົບສະສົມ
- ງານພາກລັດໃນຂັ້ນສູນກາງ ແລະ ແຂວງ
- ບັນດາຫ້ອງການປົກຄອງເມືອງຕ່າງໆ
- ສາຍການບິນ ແລະ ຜູ້ດໍາເນີນທຸລະກິດກ່ຽວກັບການບິນຕ່າງໆ
- ຜູ້ຊື້ໄຟຟ້າ
- ຜູ້ຄວບຄຸມເຣດາ ແລະ ລະບົບຄົມມະນາຄົມ (ວິທະຍຸ, ໂທລະພາບ, ສັນຍານໂທລະສັບເຄື່ອນທີ່ ແລະ ຈານດາວທຽມ)
- ອົງກອນທີ່ບໍ່ຂຶ້ນກັບລັດຖະບານ

ແຜນການມີສ່ວນຮ່ວມຂອງຜູ້ທີ່ສ່ວນໄດ້ເສຍ ແມ່ນໄດ້ກໍານົດບັນດາຜູ້ທີ່ມີສ່ວນກ່ຽວຂ້ອງ ແລະ ອະທິບາຍເຖິງການປະກອບສ່ວນຂອງກຸ່ມຄົນດັ່ງກ່າວຕໍ່ກັບໂຄງການ

## ການປຶກສາຫາລື ໃນຊ່ວງການການລົງຢ້ຽມຢາມເຜີຍແຜ່ຂໍ້ມູນ (18-22 ກໍລະກົດ 2022)

- ນາຍບ້ານ ແລະ ປະຊາຊົນຜູ້ທີ່ຖືກຜົນກະທົບ (ໄດ້ຮັບຜົນກະທົບຈາກທີ່ດິນຂອງໂຄງການ) ແມ່ນຜູ້ມີສ່ວນຮ່ວມເປົ້າໝາຍຫຼັກ, ໂດຍສະເພາະຜູ້ທີ່ຖືກຜົນກະທົບດ້ານທີ່ດິນຈາກໂຄງການ.
- ໃນລາຍງານກອງປະຊຸມ ແມ່ນຈະລົງລາຍເຊັນໂດຍຜູ້ເຂົ້າຮ່ວມເພື່ອສະແດງຂໍ້ຕົກລົງກ່ຽວກັບມາດຕະການຫຼຸດຜ່ອນຜົນກະທົບທີ່ຈະສະເໜີ. ສໍາລັບຜູ້ທີ່ບໍ່ສາມາດອ່ານໄດ້ແມ່ນຈະມີການສະຫຼຸບການປະຊຸມດ້ວຍວາຈາກ່ອນລົງລາຍເຊັນ ໃນການລາຍງານກອງປະຊຸມ

## ຂັ້ນຕອນຜູ້ທີ່ມີສ່ວນກ່ຽວຂ້ອງໃນອະນາຄົດ

- ໄລຍະກ່ອນການກໍ່ສ້າງ - ຈັດຕັ້ງປະຕິບັດຕາມການປະເມີນຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ (ESIA) ແລະ ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ
- ໄລຍະກໍ່ສ້າງ - ມີສ່ວນຮ່ວມກັບຜູ້ທີ່ມີສ່ວນກ່ຽວຂ້ອງຢ່າງສະໝໍ່າສະເໝີ ຕະຫຼອດໄປຈົນເຖິງກິດຈະກໍາ ແລະ ຂະບວນການກໍ່ສ້າງ.
- ໄລຍະດໍາເນີນງານ - ມີສ່ວນຮ່ວມກັບຜູ້ທີ່ມີສ່ວນກ່ຽວຂ້ອງໃນແຕ່ລະມື້.

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ແຜນການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້ສ່ວນເສຍຈາກໂຄງການ (SEP)

## ຫຼັກການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້ສ່ວນເສຍ

- ເລີ່ມຕົ້ນຂະບວນການກຳນົດຜູ້ໄດ້ຮັບຜົນກະທົບຈາກຄວາມສ່ຽງທາງສິ່ງແວດລ້ອມ ແລະ ສັງຄົມ ແລະ ສືບຕໍ່ປະຕິບັດຢ່າງຕໍ່ເນື່ອງເມື່ອມີຄວາມສ່ຽງ ແລະ ຜົນກະທົບເກີດຂຶ້ນ
- ຢູ່ບົນພື້ນຖານຂອງການເປີດເຜີຍ ແລະ ເຜີຍແຜ່ຂໍ້ມູນທີ່ກ່ຽວຂ້ອງ, ໂປ່ງໃສ, ມີຈຸດປະສົງ, ມີຄວາມໝາຍ ແລະ ເຂົ້າເຖິງຂໍ້ມູນໄດ້ງ່າຍ ເຊິ່ງຕ້ອງຢູ່ໃນຮູບແບບ ແລະ ພາສາທ້ອງຖິ່ນທີ່ເໝາະສົມ ແລະ ເຂົ້າໃຈງ່າຍສຳລັບຜູ້ໄດ້ຮັບຜົນກະທົບ
- ສຸມໃສ່ການມີສ່ວນຮ່ວມກັບຜູ້ໄດ້ຮັບຜົນກະທົບໂດຍກົງ ຕົວຢ່າງເຊັ່ນ: ຜູ້ຊາຍ, ແມ່ຍິງ, ຜູ້ເຖົ້າ, ເຍົາວະຊົນ, ຄົນພັດຖິ່ນ, ກຸ່ມຄົນທີ່ມີຄວາມອ່ອນໄຫວ ແລະ ດ້ອຍໂອກາດ
- ປາສະຈາກການຕົວະຍົວະ, ແຊກແຊງ, ບີບບັງຄັບ ຫຼື ຂົ່ມຂູ່ຈາກພາຍນອກ
- ເຮັດໃຫ້ການມີສ່ວນຮ່ວມມີຄວາມໝາຍ ທຸກບ່ອນທີ່ໃຊ້ໄດ້
- ມີການປະກອບເອກະສານ. ຖ້າຫາກໂຄງການໄດ້ມີສ່ວນຮ່ວມກັບຂະບວນການດັ່ງກ່າວ ຄວນມີເອກະສານອ້າງອີງ ແລະ ຢືນຢັນການປະຕິບັດການດັ່ງກ່າວ

## ຍຸດທະສາດເພີ່ມເຕີມສຳລັບຜູ້ຍິງ ແລະ ກຸ່ມອ່ອນໄຫວ

- ເປົ້າໝາຍກຸ່ມແມ່ຍິງ: ນຳພາ ແລະ ອຳນວຍຄວາມສະດວກໂດຍແມ່ຍິງໃນແຕ່ລະໝູ່ບ້ານ ໃນກຸ່ມປະຊາກອນທີ່ໄດ້ຮັບຜົນກະທົບໂດຍກົງ
- ເປົ້າໝາຍກຸ່ມເຍົາວະຊົນ: ນຳພາໂດຍເຍົາວະຊົນຜູ້ອຳນວຍຄວາມສະດວກໃນແຕ່ລະໝູ່ບ້ານ ໃນກຸ່ມປະຊາກອນທີ່ໄດ້ຮັບຜົນກະທົບໂດຍກົງ
- ການລົງຢ້ຽມຢາມໂຮງຮຽນ: ປຶກສາ ແລະ ເປີດເຜີຍຂໍ້ມູນກັບນັກຮຽນ ແລະ ຄູອາຈານ
- ການລົງຢ້ຽມຢາມຄົວເຮືອນ: ໂດຍສະເພາະຜູ້ພິການ, ຜູ້ສູງອາຍຸທີ່ມີບັນຫາດ້ານການເຄື່ອນໄຫວ ແລະ ຜູ້ດ້ອຍໂອກາດອື່ນໆ ທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຂັ້ນບ້ານໄດ້
- ເປົ້າໝາຍກຸ່ມຊົນເຜົ່າ: ຈັດຕັ້ງກຸ່ມສຳລັບຄົນໃນທ້ອງຖິ່ນທີ່ສາມາດຈັດຕັ້ງການປະຊຸມຍ່ອຍໃນພາສາຂອງແຕ່ລະເຜົ່າ ເພື່ອອະທິບາຍເປີດເຜີຍຂໍ້ມູນ





FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ແຜນພັດທະນາຊຸມຊົນ ແລະ ຊົນເຜົ່າ (CEGDP) – ມາດຕະການແບ່ງປັນຜົນປະໂຫຍດ



## ສະເໜີ ມາດຕະການແບ່ງປັນ ຜົນປະໂຫຍດ

- ໄຟຟ້າພະລັງງານແສງອາທິດໃນເຂດຊົນນະບົດ
- ການຝຶກອົບຮົມດ້ານກະສິກຳ (ກາແຟ) ແລະ ລ້ຽງສັດ
- ທັກສະ ແລະ ໂອກາດໃນການ ການຈ້າງງານໃນທ້ອງຖິ່ນ
- ການສຶກສາ ແລະ ການສົ່ງເສີມການສຶກສາ (ວິທະຍາໄລ)
- ການບໍລິການ ແລະ ການສົ່ງເສີມດ້ານສາທາລະນະສຸກ
- ການປູກຈິດສຳນຶກໃຫ້ແກ່ຊຸມຊົນ
- ການສ້າງຄວາມເຂັ້ມແຂງໃນທ້ອາຖິ່ນ




## ເປົ້າໝາຍຊຸມຊົນ ແລະ ຜູ້ໄດ້ຮັບສິດ

- ເນັ້ນໜັກໃສ່ພັດທະນາ ແມ່ຍິງ ແລະ ກຸ່ມຊົນເຜົ່າ
- ໃນ 32 ໝູ່ບ້ານຊົນເຜົ່າທີ່ໄດ້ຮັບຜົນກະທົບຈາກໂຄງການ ລວມມີ ຕຣຽງ, ແຢະ, ກະຕູ, ຮາລັກ..

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ແຜນພັດທະນາຊຸມຊົນ ແລະ ຊົນເຜົ່າ (CEGDP) – ມາດຕະການແບ່ງປັນຜົນປະໂຫຍດ

| ກິດຈະກໍາຂອງໂຄງການ | ຜົນກະທົບທາງສັງຄົມ | ໝູ່ບ້ານ | ມາດຕະການຫຼຸດຜ່ອນ |
|---|---|---|---|
| ໄລຍະກໍ່ສ້າງ ແບະ ດໍາເນີນງານ | ໂອກາດທາງເສດຖະກິດ<br>■ ການຈ້າງງານ ແລະ ການຝຶກອົບຮົມໃນຊຸມຊົນ<br>■ ການເຂົ້າເຖິງພື້ນທີ່ກະສິກໍາ/ປ່າໄດ້ງ່າຍຂຶ້ນ | 32 ໝູ່ບ້ານໃນຂອບເຂດໂຄງການ | N/A |
| ເຂດກັງຫັນລົມ,, ເສັ້ນທາງ, ສາຍສົ່ງ 35 kV, 115 kV, ສະຖານີຍ່ອຍ 500 kV, , ສາຍສົ່ງ 500 kV | ການປ່ຽນແທນທາງເສດຖະກິດ ແລະ ຜົນກະທົບຕໍ່ການດໍາລົງຊີວິດຂອງປະຊາຊົນ<br>■ ສູນເສຍພື້ນທີ່ກະສິກໍາ<br>■ ສູນເສຍການເກັບເຄື່ອງປ່າຂອງດົງໃນພື້ນທີ່ | 23 ໝູ່ບ້ານທີ່ໄດ້ຮັບຜົນກະທົບຈາກການສູນເສຍພື້ນທີ່ກະສິກໍາແມ່ນໄດ້ຖືກກ່າວລະອຽດຢູ່ໃນຕາຕະລາງ 8.54<br>■ 25 ໝູ່ບ້ານທີ່ໄດ້ຮັບຜົນກະທົບຈາກການສູນເສຍເຄື່ອງປ່າຂອງດົງແມ່ນໄດ້ຖືກກ່າວລະອຽດຢູ່ໃນຕາຕະລາງ 8.56 | • ແຜນຍົກຍ້າຍຈັດສັນ<br>• ແຜນການມີສ່ວນຮ່ວມກັບຜູ້ມີສາວນໄດ້ສ່ວນເສຍ<br>• ແຜນພັດທະນາຊົນເຜົ່າ ແລະ ຊຸມຊົນ |
| ການສັນຈອນຂອງຍານພາຫະນະເນື່ອງຈາກການຂົນສົ່ງວັດສະດຸ ແລະ ການນໍາໃຊ້ເຄື່ອງຈັກ ທີ່ກ່ຽວຂ້ອງໃນກິດຈະກໍາການກໍ່ສ້າງ | ຜົນກະທົບຕໍ່ສຸຂະພາບ ແລະ ຄວາມປອດໄພໃນຊຸມຊົນ<br>■ ໂຄງສ້າງ ແລະ ເຄື່ອງຈັກ<br>■ ການສັນຈອນຂອງຍານພາຫະນະ<br>■ ຄວາມປອດໄພ<br>■ ທ່າແຮງໃນການແຜ່ຂອງເຊື້ອພະຍາດ | 32 ໝູ່ບ້ານໃນຂອບເຂດໂຄງການ | • ແຜນການມີສ່ວນຮ່ວມກັບຜູ້ມີສາວນໄດ້ສ່ວນເສຍ<br>• ກົນໄກການຮ້ອງທຸກ<br>• ແຜນຄຸ້ມຄອງການຫຼັ່ງໄຫຼເຂົ້າຂອງແຮງງານໃນຊຸມຊົນ<br>• ແຜນຄຸ້ມຄອງຄວາມປອດໄພ ແລະ ຊີວະອະນາໄມ |
| ໄລຍະກໍ່ສ້າງ | ຜົນກະທົບກ່ຽວກັບການຫຼັ່ງໄຫຼເຂົ້າມາຂອງແຮງງານໃນພື້ນທີ່<br>■ ແຮງງານ ແລະ ສະພາບການເຮັດວຽກ<br>■ ການຄ້າບໍລິການທາງເພດ<br>■ ຄວາມຫຼາກຫຼາຍໃນຊຸມຊົນ ແລະ ຄວາມຮຸນແຮງທາງເພດ<br>■ ໂຄງລ່າງພື້ນຖານ ແລະ ຊັບພະຍາກອນສາທາລະນະ | ສະຖານທີ່ແຄ້ມຄົນງານ | • ແຜນຄຸ້ມຄອງການຫຼັ່ງໄຫຼເຂົ້າມາຂອງແຮງງານໃນຊຸມຊົນ<br>• ແຜນຄຸ້ມຄອງແຄ້ມຄົນງານ<br>• ແຜນຄຸ້ມຄອງຄວາມປອດໄພ ແລະ ສຸຂະພາບ<br>• ແຜນຄຸ້ມຄອງຄວາມປອດໄພ ແລະ ຊີວະອະນາໄມ<br>• ແຜນການມີສ່ວນຮ່ວມກັບຜູ້ມີສ່ວນໄດ້ສ່ວນເສຍ |
| ໄລຍະດໍາເນີນງານ | ຜົນກະທົບຕໍ່ສິ່ງອໍານວຍຄວາມສະດວກໃນທ້ອງຖິ່ນ<br>■ ສຽງ<br>■ ການບົດບັງທິວທັດ ແລະ ວິໄສທັດ<br>■ ເງົາກະພິບ | 32 ໝູ່ບ້ານໃນຂອບເຂດໂຄງການ | ແຜນການມີສ່ວນຮ່ວມກັບຜູ້ມີສ່ວນໄດ້ສ່ວນເສຍ |
| ໄລຍະກໍ່ສ້າງ | ຜົນກະທົບຕໍ່ຊົນເຜົ່າ<br>■ ການເຊື່ອມໂຊມຂອງວັດທະນະທໍາຊົນເຜົ່າ | 32 ໝູ່ບ້ານໃນຂອບເຂດໂຄງການ | • ແຜນຄຸ້ມຄອງການຫຼັ່ງໄຫຼເຂົ້າມາຂອງແຮງງານໃນຊຸມຊົນ<br>• ແຜນພັດທະນາຊຸມຊົນ ແລະ ຊົນເຜົ່າ |

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ແຜນພັດທະນາຊຸມຊົນ ແລະ ຊົນເຜົ່າ

## 1 ການຈ້າງງານໃນຊຸມຊົນ

- ຊຸມຊົນມີຄວາມສົນໃຈໃນໂອກາດໃນການຈ້າງງານຂອງໂຄງການ. ຜ່ານແນວທາງການເຮັດວຽກຮ່ວມກັນເພື່ອຝຶກອົບຮົມທັກສະທີ່ຈະໄດ້ຈັດຂຶ້ນໂດຍສະເພາະເພື່ອສະໜອງແຮງງານໃຫ້ແກ່ໂຄງການ
- ແຮງງານໃນທ້ອງຖິ່ນຕ້ອງໄດ້ຮັບການຝຶກທັກສະທີ່ກ່ຽວຂ້ອງກັບໂຄງການເພື່ອໂອກາໃນນການຈ້າງງານຫຼັງຈາກຈົບການຝຶກອົບຮົມດັ່ງກ່າວ





## 2 ໄຟຟ້າຊົນນະບົດ

ສຸມໃສ່ສະໜອງການເຂົ້າເຖິງໄຟຟ້າສໍາລັບຄົວເຮືອນທີ່ບໍ່ໄດ້ນອນໃນເຂດຕາຂ່າຍໄຟຟ້າ. ປະມານ 56 ຄົວເຮືອນ (280 ຄົນ) ໃນບ້ານດາກໂດມ ຈະສາມາດເຂົ້າເຖິງໄຟຟ້າໄດ້ຈາກໄຟຟ້າພະລັງງານແສງຕາເວັນ

## 3 ການຝຶກອົບຮົມການປູກຝັງ ແລະ ລ້ຽງສັດ

- ຕ້ອງມີການສ້າງຄວາມເຂັ້ມແຂງໂດຍຮ່ວມມືກັບອົງການຈັດຕັ້ງທ້ອງຖິ່ນ ໂດຍສະເພາະແມ່ນພະແນກກະສິກຳ ແລະ ປ່າໄມ້ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຝຶກອົບຮົມເພື່ອເພີ່ມຄຸນະພາບຂອງກາເຜຼ ແລະ ຕ້ອງໄດ້ປະຕິບັດສະໝໍ່າສະເໝີເພື່ອເພີ່ມຄຸນະພາບການຜະລິດກາເຟຕໍ່ໄປ
- ໂຄງການອື່ນທີ່ຈະເນັ້ນໜັກເພື່ອການເພີ່ມຜົນຜະລິດທາງກະສິກໍາຈະກໍານົດເປົ້າໝາຍໃນການລ້ຽງສັດ. ໂຄງການນີ້ຈະຊ່ວຍສ້າງຄວາມສາມາດໃນການສົ່ງເສີມການລ້ຽງສັດຜ່ານການຝຶກອົບຮົມ



FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ແຜນພັດທະນາຊຸມຊົນ ແລະ ຊົນເຜົ່າ

## 4 ການສຶກສາ ແລະ ການຊ່ວຍເຫຼືອ

- ກໍ່ສ້າງ ແລະ ຟື້ນຟູສະຖານສຶກສາ
- ໂຄງການໃຫ້ທຶນການສຶກສາ
- ການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ການສຶກສາ
- ທຶນການສຶກສາສໍາລັບວິທະຍາໄລ





## 5 ການສົ່ງເສີມດ້ານສາທາລະນະສຸກ

- ໄລຍະດຳເນີນງານ, ການສົ່ງເສີມດ້ານສາທາລະນະສຸກ ແລະ ສະຖຽນລະພາບຂອງຊຸມຊົນຈະຖືກພັດທະນາໃຫ້ເຂັ້ມແຂງ.
- ບັນດາຊຸມຊົນຕ່າງໆຈະໄດ້ຮັບຜົນປະໂຫຍດຈາກກິດກະກໍາຂອງໂຄງການໂດຍໄດ້ກໍານົດ ແລະ ເຫັນດີຈາກຄະນະກໍາມະການຮ່ວມສໍາລັບແຜນພັດທະນາປະຈໍາປີເພື່ອຮັບປະກັນການເຂົ້າເຖິງການບໍລິການດ້ານສະທາລະນະສຸກ
- ຈະມີການສະໜອງຢາປົວພະຍາດໃຫ້ແກ່ສູນປິ່ວພະຍາດ 5 ແຫ່ງໃນຂອບເຂດໂຄງການ. ນອກນີ້ຍັງສຸ່ມໃສ່ການສັກວັກຊີນ, ເສີມວິຕາມິນ ແລະ ໂພຊະນາການໃຫ້ເດັກນ້ອຍເພື່ອການພັດທະນາເດັກນ້ອຍໄວຈະເລີນພັນ

## 6 ການສ້າງຄວາມອາດສາມາດ ແລະ ປູກຈິດສໍານຶກໃນທ້ອງຖິ່ນ

- ຄະນະກໍາມະການຮ່ວມຈະຖືກສ້າງຕັ້ງຂຶ້ນເພື່ອຈຸດປະສົງຂອງການປະຕິບັດໂຄງການພັດທະນາຊຸມຊົນ. ຄະນະກໍາມະການຈະຮັບຜິດຊອບໃນການຊີ້ນໍາລວມຂອງໂຄງການພັດທະນາຊຸມຊົນແລະ ພິຈາລະນາການປັບປຸງປະຈໍາປີກ່ຽວກັບຄວາມຕ້ອງການ ແລະໂອກາດຂອງບ້ານ ແລະ ຂໍລິເລີ່ມຈະຖືກນໍາພາໂດຍແຜນການຄຸ້ມຄອງ.
- ການຝຶກອົບຮົມປູກຈິດສໍານຶກຂອງຊຸມຊົນຕ່າງໆ ຈະຖືກອໍານວຍຄວາມສະດວກ ເພື່ອສ້າງຄວາມເຂັ້ມແຂງໃຫ້ທ້ອງຖິ່ນໃນລະດັບຕ່າງໆ.



FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT


## ມາດຕະການຫຼຸດຜ່ອນສະເພາະບົນຫາບົດບາດຍິງ-ຊາຍ

- ❖ ແຜນພັດທະນາຊົນເຜົ່າ ແລະ ຊຸມຊົນ
- ❖ ແຜນການຄຸ້ມຄອງຄວາມເພິງພໍໃຈໃນຊຸມຊົນທ້ອງຖິ່ນ
- ❖ ແຜນການຄຸ້ມຄອງຍົກຍ້າຍ-ຈັດສັນ
- ❖ ແຜນການມີສ່ວນຮ່ວມກັບຜູ້ມີສ່ວນໄດ້ສ່ວນເສຍ
- ❖ ແຜນຄຸ້ມຄອງການຫຼັ່ງໄຫຼເຂົ້າມາຂອງແຮງງານໃນທ້ອງຖິ່ນ ແລະ ຄວາມເພິງພໍໃຈໃນທ້ອງຖິ່ນ
- ❖ ແຜນຄຸ້ມຄອງຄວາມປອດໄພ ແລະ ສຸຂະພາບຊຸມຊົນ

ແຜນການດັ່ງກ່າວແມ່ນສຸມໃສ່ບັນດາມາດຕະການລຸ່ມນີ້:

**❖ ການສ້າງຄວາມເຂັ້ມແຂງຕໍ່ແມ່ຍິງໃນດ້ານເສດຖະກິດ**

- ແຜນສ້າງລາຍໄດ້ເພື່ອການດໍາລົງຊີວິດຈາກການປູກຝັງ ແລະ ລ້ຽງສັດ

**❖ ການສ້າງຄວາມເຂັ້ມແຂງໃນທ້ອງຖິ່ນ**

- ສະມາຊິກໃນທ້ອງຖິ່ນ, ຄະນະກໍາມະການ
- ການມີສ່ວນຮ່ວມໃນກິດຈະກໍາຂອງໂຄງການ
- ໂອກາດໃນການຈ້າງງານ ແລະ ຝຶກທັກສະ

**❖ ການສຶກສາ ແລະ ການສະໜັບສະໜູນ (ວິທະຍາໄລ)**

- ທຶນການສຶກສາ

**❖ ການບໍລິການ ແລະ ການສະໜັບສະໜູນດ້ານສາທາລະນະສຸກ**

- ການສະໜັບສະໜູນ ແລະ ຊ່ວຍເຫຼືອດ້ານສາທາລະນະສຸກແກ່ແມ່ຍິງ







FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ແຜນທົດແທນຄ່າເສຍຫາຍ, ແຜນຍົກຍ້າຍ-ຈັດສັນ(RP)

## ພາບລວມ

ແຜນຍົກຍ້າຍຈັດສັນຖືກອອກແບບມາເພື່ອແກ້ໄຂຜົນກະທົບຂອງການປ່ຽນແປງທາງດ້ານເສດຖະກິດຕໍ່ຄົວເຮືອນທີ່ໄດ້ຮັບຜົນກະທົບເນື່ອງຈາກການຍົກຍ້າຍຈັດສັນທີ່ບໍ່ສະໝັກໃຈ. ຈຸດປະສົງຂອງແຜນດັ່ງກ່າວແມ່ນເພື່ອໃຫ້ແນ່ໃຈວ່າຊີວິດການເປັນຢູ່ຂອງຜູ້ໄດ້ຮັບຜົນກະທົບທັງໝົດຈະໄດ້ຮັບການປັບປຸງ ຫຼື ຢ່າງໜ້ອຍກໍ່ໄດ້ຮັບການຟື້ນຟູໃຫ້ຄືກັບສະພາບກ່ອນມີໂຄງການ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນທີ່ມີຄວາມສ່ຽງ.

## ຜູ້ໄດ້ຮັບສິດ

ຄົວເຮືອນທີ່ມີປັດໃຈດັ່ງລຸ້ມນີ້ຈະມີສິດໄດ້ຮັບການຊົດເຊີຍ

(i) ຜູ້ທີ່ມີດິນຕາມກົດໝາຍຜູ້ທີ່ສູນເສຍຕອນດິນທັງໝົດ ຫຼື ບາງສ່ວນ

(ii) ຜູ້ທີ່ສູນເສຍຕອນດິນທັງໝົດ ຫຼື ບາງສ່ວນ ຫຼື ຜູ້ທີ່ບໍ່ແມ່ນເຈົ້າຂອງທີ່ດິນຕາມກົດໝາຍຢ່າງເປັນທາງການ ແຕ່ໄດ້ມີການອ້າງສິດນຳໃຊ້ ແລະ ຖືກຮັບຮອງຈາກພາກສ່ວນທີ່ກ່ຽວຂ້ອງແລ້ວ

(iii) ຜູ້ທີ່ສູນເສຍຕອນດິນທັງໝົດ ຫຼື ບາງສ່ວນ ຫຼື ຜູ້ທີ່ບໍ່ແມ່ນເຈົ້າຂອງທີ່ດິນຕາມກົດໝາຍຢ່າງເປັນທາງການ, ໄດ້ມີການອ້າງສິດນຳໃຊ້ແຕ່ຖືກຮັບຮອງຈາກພາກສ່ວນທີ່ກ່ຽວ

## ວັນຂຶ້ນທະບຽນສິດ (Cut Off Date)

- ການຮັບສິດຈະໄດ້ມີການກຳນົດໄລຍະເວລາສິ້ນສຸດ, ເຊິ່ງຈະແມ່ນມື້ສຸດທ້າຍຂອງການສຳຫຼວດເກັບຂໍ້ມູນລະອຽດ
- ການສຳຫຼວດລະອຽດໄດ້ຖືກຈັດຂຶ້ນໃນວັນທີ 17 ພຶດສະພາ - 21 ມິຖຸນາ ທີ່ເມືອງ ດາກຈຶງ ແລະ 14-18 ມິຖຸນາ ປີ 2022 ທີ່ເມືອງຊານໄຊ
- ຜູ້ໄດ້ຮັບຜົນກະທົບທັງໝົດມີສິດໄດ້ຮັບການຊົດເຊີຍບັນດາຊັບສິນທີ່ເສຍຫາຍ ແລະ ວິທີການການຟື້ນຟູທີ່ເໝາະສົມເພື່ອຊ່ວຍໃຫ້ຊີວິດການເປັນຢູ່ຂອງເຂົາເຈົ້າດີກວ່າເກົ່າ ຫຼື ບໍ່ຫຼຸດເກົ່າກ່ອນມີໂຄງການ ໃນດ້ານຄວາມສາມາດໃນການສ້າງລາຍໄດ້ ແລະ ການຜະລິດ





FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ແຜນທົດແທນຄ່າເສຍຫາຍ, ແຜນຍົກຍ້າຍ-ຈັດສັນ(RP)

## ຫຼັກການຫຼັກໆແມ່ນມີດັ່ງລຸ່ມນີ້:

ຫຼັກການຫຼັກໆມີດັ່ງລຸ່ມນີ້ ແຕ່ບໍ່ຈຳກັດພຽງແຕ່ການສະເໜີທີ່ກ່າວມານີ້ເທົ່ານັ້ນ:

- ການທົດແທນທາງເສດຖະກິດຂອງຜູ້ໄດ້ຮັບຜົນກະທົບແມ່ນຕ້ອງດຳເນີນໄປຕາມກົດໝາຍຂອງ ສປປ ລາວ ແລະ ນະໂຍບາຍປົກປ້ອງຂອງ ADB
- ມີການຊົດເຊີຍຄືນຕາມຜົນກະທົບ (ດິນແທນດິນ) ເມື່ອເປັນໄປໄດ້, ການຊົດເຊີຍເປັນເງິນຈະໄດ້ຮັບການພິຈາລະນາກໍ່ຕໍ່ເມື່ອມັນເປັນຄວາມຕ້ອງການຂອງຜູ້ໄດ້ຮັບຜົນກະທົບເອງ. ຖ້າຫາກການຊົດເຊີຍແບບດິນແທນດິນບໍ່ສາມາດປະຕິບັດໄດ້, ຍ້ອນຂໍ້ຈຳກັດຂອງທີ່ດິນທີ່ມີຈະໄດ້ຮັບການລະບຸ ແລະ ບັນທຶກເປັນລາຍລັກອັກສອນໂດຍໂຄງການ
- ຜູ້ໄດ້ຮັບຜົນກະທົບຕໍ່ທີ່ດິນ ຫຼື ຊັບສິນ ຈາກການຍຶດຄອງທີ່ດິນຂອງໂຄງການໃນວັນຂຶ້ນທະບຽນສິດ (cut-off date) ຈະໄດ້ຮັບຄ່າຊົດເຊີຍຕາມການສຳຫຼວດທີ່ຖືກວັດແທກໂດຍລະອຽດ ແລະ ເກນໃນການໃຫ້ສິດ. ພວກເຂົາອາດມີສິດໄດ້ຮັບຄວາມຊ່ວຍເຫຼືອດ້ານການຟື້ນຟູ, ປັບປຸງຊີວິດການເປັນຢູ່ ແລະ ຄວາມສາມາດການຜະລິດຂອງພວກເຂົາໃຫ້ສອດຄ່ອງກັບສະພາບກ່ອນມີໂຄງການ
- ຄອບຄົວທີ່ໄດ້ຮັບຜົນກະທົບຮອດ 10% ຂອງດິນທຳການຜະລິດຫຼັກແມ່ນຈະຖືວ່າເປັນຜູ້ໄດ້ຮັບຜົນກະທົບຮຸນແຮງ
- ໂຄງການເອົາໃຈໃສ່ຜູ້ຖືກກະທົບທັງໝົດ, ລວມມີ 1, ຜູ້ທີ່ມີດິນຕາມກົດໝາຍຜູ້ທີ່ສູນເສຍຕອນດິນທັງໝົດ ຫຼື ບາງສ່ວນ ແລະ 2, ຜູ້ທີ່ສູນເສຍຕອນດິນທັງໝົດ ຫຼື ບາງສ່ວນ ຫຼື ຜູ້ທີ່ບໍ່ແມ່ນເຈົ້າຂອງທີ່ດິນຕາມກົດໝາຍຢ່າງເປັນທາງການ ແຕ່ໄດ້ມີການອ້າງສິດນຳໃຊ້ ແລະ ຖືກຮັບຮອງຈາກພາກສ່ວນທີ່ກ່ຽວຂ້ອງແລ້ວ
- ໂຄງການຈະຊົດເຊີຍຄ່າເສຍຫາຍເຕັມຈຳນວນ
- ຈະມີກົນໄກການຮ້ອງທຸກທີ່ມີປະສິດທິພາບໃນໄລຍະການຈັດຕັ້ງປະຕິບັດແຜນຍົກຍ້າຍຈັດສັນ
- ມາດຕະການພິເສດຈະໄດ້ຈັດຕັ້ງປະຕິບັດໃນການຍົກຍ້າຍຈັດສັນເພື່ອຮັກສາຜົນປະໂຫຍດທາງສັງຄົມ ແລະ ເສດຖະກິດຂອງປະຊາຊົນກຸ່ມທີ່ອ່ອນໄຫວ

## ວິທີການຊົດເຊີຍ ແລະ ທົດແທນຄ່າເສຍຫາຍ

ການເວັນຄືນທີ່ດິນຈະໄດ້ຮັບການນຳພາໂດຍພາກລັດທີ່ກ່ຽວຂ້ອງ. ໂຄງການໄດ້ດຳເນີນການຕາມຂັ້ນຕອນໃນການກຳນົດຫົວໜ່ວຍຄ່າຕອບແທນດັ່ງນີ້:

- ສ້າງຕັ້ງຄະນະກຳມະການ ນຳໃຊ້ຄະນະກຳມະການ ເລກທີ 160/ຈຂ.ຊກ ເດືອນພະຈິກ ປີ 2020 ສຳລັບເມືອງດາກຈຶງ, ແຂວງເຊກອງ ແລະ ເລກທີ 307/ຈຂ.ອປ ເດືອນ ມີນາ ປີ 2022 ສຳລັບເມືອງຊານໄຊ, ແຂວງອັດຕະປື
- ກຳນົດອັດຕາໂດຍຄະນະກຳມະການ
- ເປີດເຜີຍ ແລະ ປຶກສາກັບຜູ້ໄດ້ຮັບຜົນກະທົບກ່ຽວກັບອັດຕາຫົວໜ່ວຍ ແລະ ຂໍ້ຕົກລົງເພື່ອຮັບຂໍ້ສະເໜີຊີ້ແນະກ່ຽວກັບອັດຕາຫົວໜ່ວຍທີ່ໄດ້ຮັບຈາກຜູ້ໄດ້ຮັບຜົນກະທົບ
- ຄະນະກຳມະການສະຫຼຸບລາຄາຫົວໜ່ວຍສຸດທ້າຍ
- ຈັດກອງປະຊຸມຮັບຮອງລາຄາຫົວໜ່ວຍ
- ຂໍ້ຕົກລົງການຮັບຮອງຫົວໜ່ວຍລາຄາ

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT



## ວິທີການຊົດເຊີຍ ແລະ ທົດແທນຄ່າເສຍຫາຍ

ສ້າງຕັ້ງຄະນະກຳມະການຂອງໂຄງການ

↓

- ແຂວງເຊກອງ: ກຳນົດໂດຍອ້າງອີງຕາມຫົວໜ່ວຍລາຄາທີ່ຖືກກຳນົດໃນໂຄງການອື່ນ ເລກທີ 74/ຈຂ.ຊກ
- ແຂວງອັດຕະປື: ກຳນົດໂດຍອ້າງອີງຕາມຫົວໜ່ວຍລາຄາຂອງໂຄງການສາຍສົ່ງ 500kV ພາຍໃນແຂວງ
- ອ້າງອີງຕາມຫົວໜ່ວຍລາຄາໂຕຈິງຕາມທ້ອງຕະຫຼາດ ແລະ ສົມທຽບລາຄາຕອບດິນກັບຫ້ອງການທີ່ດິນ, ລາຄາຜົນລະປູກ ແລະ ຕົ້ນໄມ້ຈາກຫ້ອງການກະສິກຳ, ລາຄາສິ່ງປຸກສ້າງຈາກຫ້ອງການໂຍທາທິການ ແລະ ຂົນສົ່ງ

ຄະນະກຳມະການສັງລວມຂໍ້ມູນຜົນກະທົບເບື້ອງຕົ້ນເພື່ອກຳນົດຫົວໜ່ວຍລາຄາ

↓

ກຳນົດຫົວໜ່ວຍລາຄາ

↓

ສະເໜີຫົວໜ່ວຍລາຄາຕໍ່ປະຊາຊົນທີ່ຖືກຜົນກະທົບ

↓

ຂໍ້ສະເໜີແນະຈາກຜູ້ໄດ້ຮັບຜົນກະທົບ

ຄະນະກຳມາການສັງລວມຫົວໜ່ວຍລາຄາຄັ້ງສຸດທ້າຍ

↓

ກອງປະຊຸມຮັບຮອງເອົາຫົວໜ່ວຍລາຄາ

↓

ຂໍ້ຕົກລົງການຮັບຮອງຫົວໜ່ວຍລາຄາ

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT



## ຄຸນສົມບັດ ແລະ ມາດຕະຖານໃນການກຳນົດຜູ້ໄດ້ຮັບສິດ

| ປະເພດການສູນເສຍ | ຜູ້ໄດ້ຮັບສິດ | ນະໂຍບາຍການຊົດເຊີຍ |
|---|---|---|
| ການສູນເສຍພື້ນທີ່ທຳການຜະລິດ (ມີໃບຕາດິນ) | • ເຈົ້າຂອງທີ່ດິນທີ່ມີໃບຕາດິນຖືກຕ້ອງຕາມກົດໝາຍ<br>• ມີສິດໄດ້ຮັບໃບຕາດິນຕາມກົດໝາຍວ່າດ້ວຍທີ່ດິນ<br>• ມີການອ້າງສິດໃນທີ່ດິນດັ່ງກ່າວເຊິ່ງມີການຮັບຮອງຕາມກົດໝາຍຂອງປະເທດ | • ການຊົດເຊີຍເປັນເງິນຕາມຄວາມເສຍຫາຍຂອງພື້ນທີ່ທີ່ໄດ້ຮັບຜົນກະທົບ ຫຼື ການຊົດເຊີຍເປັນທີ່ດິນຖ້າເປັນໄປໄດ້<br>• ສຳລັບທີ່ດິນທີ່ດີເທີນ, ຜູ້ມີໃບຕາດິນຈະໄດ້ຮັບຄ່າໃຊ້ຈ່າຍທີ່ກ່ຽວຂ້ອງທັງໝົດທີ່ເກີດຈາກໂຄງການ<br>• ສູງສຸດທາງເລືອກໃນການຊົດເຊີຍແກ່ທີ່ດິນທີ່ໄດ້ຮັບຜົນກະທົບຄືຄ້າຍກັບສູນມາດນຳໃຊ້ໄດ້ຫຼັງຈາກການເວນຄືນທີ່ດິນ (ພື້ນທີ່ສູນເສຍຮຸນແຮງຂອງຜົນຜະລິດ ຕົວຢ່າງ ສູນເສຍຫຼາຍກວ່າ  ສ່ວນຮ້ອຍຂອງຜົນຜະລິດທັງໝົດ) |
| ການສູນເສຍພື້ນທີ່ທຳການຜະລິດ (ບໍ່ແມ່ນເຈົ້າຂອງດິນ) | • ຜູ້ຖືສິດທີ່ບໍ່ມີຊື່ຕາມກົດໝາຍ | • ຊົດເຊີຍຄ່າເສຍຫາຍທັງໝົດສຳລັບຜົນກະທົບອື່ນໆ ທີ່ບໍ່ແມ່ນຕອນດິນ |
| ການສູນເສຍພື້ນທີ່ທຳການຜະລິດຊົ່ວຄາວ | • ຜູ້ໄດ້ຮັບຜົນກະທົບທຸກຄົນ | • ມູນຄ່າການເຊົ່າທີ່ດິນໃນລະຫວ່າງການດຳເນີນໂຄງການ ຫຼື ການເວນຄືນທີ່ດິນຊົ່ວຄາວ<br>• ທີ່ດິນທີ່ຖືກນຳໃຊ້ຊົ່ວຄາວຈະຖືກສົ່ງຄືນແກ່ເຈົ້າຂອງຫຼັງຈາກມີການຟື້ນຟູໃຫ້ກັບສູ່ສະພາບເດີມ ຫຼື ສະພາບທີ່ດີກວ່າ |
| ດິນກະສິກຳໃນຂອບເຂດສະຫງວນແລວສາຍສົ່ງ | • ຜູ້ໄດ້ຮັບຜົນກະທົບທຸກຄົນ | • ສຳລັບດິນທີ່ໄດ້ຮັບຜົນກະທົບຈາກສາຍຜັງດິນ, ດິນກະສິກຳຈະຖືກຊົດເຊີຍແບບໄດ້ຮັບຜົນກະທົບຖາວອນເນື່ອງຈາກເຈົ້າຂອງທີ່ດິນຈະບໍ່ສາມາດໃຊ້ພື້ນທີ່ດັ່ງກ່າວໄດ້ອີກຕໍ່ໄປ. ສຳລັບຜູ້ທີ່ບໍ່ໄດ້ຖືກຳມະສິດທີ່ດິນແມ່ນຈະໄດ້ຮັບການຊົດເຊີຍສຳລັບຊັບສິນທີ່ບໍ່ແມ່ນທີ່ດິນ<br>• ສຳລັບດິນທີ່ໄດ້ຮັບຜົນກະທົບຈາກສາຍສົ່ງ, ດິນກະສິກຳຈະຖືກຊົດເຊີຍແບບໄດ້ຮັບຜົນກະທົບຊົ່ວຄາວ<br>• ຜົນລະປູກ ແລະ ຕົ້ນໄມ້ຈະຖືກຊົດເຊີຍແຕກຕ່າງຕາມແຕ່ລະປະເພດ ແລະ ປະເພດຄວາມເສຍຫາຍ (ຊົ່ວຄາວ ຫຼື ຖາວອນ)<br>• ພື້ນທີ່ປ່າຊຸມຊົນຈະບໍ່ສາມາໄດ້ຮັບການຊົດເຊີຍໄດ້. ພື້ນທີ່ດັ່ງກ່າວຈະຖືກສັງລວມໃນສັນຍາການປ່ຽນແປງທີ່ດິນໃນສັນຍາສຳປະທານ. ຖ້າຫາກຕົ້ນໄມ້ໃນປ່າດັ່ງກ່າວເປັນຊັບສິນສ່ວນຕົວແມ່ນຈະໄດ້ຊົດເຊີຍໃຫ້ເຈົ້າ |

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ແຜນທົດແທນຄ່າເສຍຫາຍ, ແຜນຍົກຍ້າຍ-ຈັດສັນ(RP)

## ຄຸນສົມບັດ ແລະ ມາດຕະຖານໃນການກຳນົດຜູ້ໄດ້ຮັບສິດ

| ປະເພດການສູນເສຍ | ຜູ້ໄດ້ຮັບສິດ | ນະໂຍບາຍການຊົດເຊີຍ |
|---|---|---|
| ການສູນເສຍຜົນລະປູກ ແລະ ຕົ້ນໄມ້ | • ບັນດາຄອບຄົວທີ່ສູນເສຍຜົນລະປູກ ແລະ ຕົ້ນໄມ້ ເນື່ອງຈາກໂຄງການ | • ຕົ້ນໄມ້ທີ່ໄດ້ຮັບຜົນກະທົບຈະໄດ້ຮັບການຊົດເຊີຍເປັນເງິນອີງຕາມລາຄາຕະຫຼາດໃນທ້ອງຖິ່ນ<br>• ຜົນຜະລິດ ແລະ ໝາກໄມ້ທີ່ໄດ້ຮັບຜົນກະທົບແມ່ນອີງຕາມມູນຄ່າການຕະຫຼາດສຳລັບຜະລິດຕະພັນສູດທິຄູນດ້ວຍ 5ປີ<br>• ສຳລັບໄມ້ເສດຖະກິດແມ່ນຈະໄດ້ຮັບການຊົດເຊີຍເປັນເງິນຕາມມູນຄ່າໃນທ້ອງຕະຫຼາດປັດຈຸບັນໂດຍອີງຕາມ ປະເພດ, ອາຍຸ ແລະ ໜ້າຕັດ, ລວງສູງ.<br>• ສົ່ງເກດໄລຍະການເກັບກ່ຽວປະຈຳປີ, ຖ້າເປັນໄປໄດ້<br>• ສຳລັບຜົນຜະລິດປະຈຳປີທີ່ບໍ່ສາມາດເກັບກ່ຽວໄດ້, ການຊົດເຊີຍເປັນເງິນຕາມລາຄາຕະຫຼາດຄູນ ຜົນຜະລິດ 3 ປີຫຼັງ |
| ຄອບຄົວອ່ອນໄຫວ | • ຄອບຄົວທີ່ຖືກພິຈາລະນາໃຫ້ເປັນຄອບຄົວອ່ອນໄຫວ | • ຕົວເລືອກທີ່ດິນປ່ຽນທີ່ດິນ ຈະເປັນຕົວເລືອກຄ້ຳປະກັນໃຫ້ບັນດາຄົນພັດຖິ່ນທີ່ອ່ອນໄຫວ.<br>• ຄ່າໃຊ້ຈ່າຍເພີ່ມຕື່ມສຳລັບການສູນເສຍທີ່ດິນ ແລະ ສິ່ງປຸກສ້າງ<br>• ຄົວເຮືອນທີ່ອ່ອນໄຫວຈະໄດ້ຮັບບຸລິມະສິດໃນການຈ້າງງານໃນໂຄງການ |





FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ແຜນທົດແທນຄ່າເສຍຫາຍ, ແຜນຍົກຍ້າຍ-ຈັດສັນ(RP)

## ແຜນຟື້ນຟູຊີວິດການເປັນຢູ່

| | ເປົ້າໝາຍ | ຜູ້ໄດ້ຮັບສິດ | ແຜນ | ໄລຍະຂອງໂຄງການ | ໄລຍະເວລາພິຈາລະນາການປະຕິບັດ |
|---|---|---|---|---|---|
| 1 | **ຝຶກອົບຮົມການກະສິກຳ ແລະ ລ້ຽງສັດ** | | | | |
| 1.1 | ສົ່ງເສີມ ແລະ ສ້າງຄວາມອາສາມາດໃນການຜະລິດກະສິກຳ | ຜູ້ໄດ້ຮັບຜົນກະທົບ | ແຜນຟື້ນຟູການດຳລົງຊີວິດ | ໄລຍະດຳເນີນງານ | ຕະຫຼອດໄລຍະເວລາໂຄງການ |
| 1.2 | ສະໜອງເມັດພັນ ແລະ ສັດລ້ຽງເພື່ອບໍລິໂພກໃນ, ໄລຍະຍາວ ພ້ອມທັງພື້ນທີ່ລ້ຽງສັດ | ຜູ້ໄດ້ຮັບຜົນກະທົບ | ແຜນຟື້ນຟູການດຳລົງຊີວິດ | ໄລຍະດຳເນີນງານ | ຕະຫຼອດໄລຍະເວລາໂຄງການ |
| 1.3 | ແນະນຳການເຮັດນາຂັ້ນໄດ | ຜູ້ໄດ້ຮັບຜົນກະທົບ | ແຜນຟື້ນຟູການດຳລົງຊີວິດ | ໄລຍະດຳເນີນງານ | ຕະຫຼອດໄລຍະເວລາໂຄງການ |
| 1.4 | ສົ່ງເສີມການປູກພືດຫລາກຫລາຍຊະນິດເພື່ອການຄ້າ ແລະ ຫາລາຍໄດ້ສູ້ຄອບຄົວ | ຜູ້ໄດ້ຮັບຜົນກະທົບ | ແຜນຟື້ນຟູການດຳລົງຊີວິດ | ໄລຍະດຳເນີນງານ | ຕະຫຼອດໄລຍະເວລາໂຄງການ |
| 1.5 | ສະໜອງອຸປະກອນໂມ້ກາເຟ/ປັ່ນເຂົ້າ | ຜູ້ໄດ້ຮັບຜົນກະທົບ | ແຜນຟື້ນຟູການດຳລົງຊີວິດ | ໄລຍະດຳເນີນງານ | ຕະຫຼອດໄລຍະເວລາໂຄງການ |
| 1.6 | ກິດຈະກຳນຳພາແມ່ຍິງຫາລາຍໄດ້ | ຜູ້ໄດ້ຮັບຜົນກະທົບ | ແຜນຟື້ນຟູການດຳລົງຊີວິດ | Operation Phase ໄລຍະດຳເນີນການ | ຕະຫຼອດໄລຍະເວລາໂຄງການ |
| 1.7 | ສົ່ງເສີມຄຸນະພາບຂອງສິນຄ້າເພື່ອສົ່ງອອກສູ່ຕະຫຼາດໂລກ | ຜູ້ໄດ້ຮັບຜົນກະທົບ | ແຜນຟື້ນຟູການດຳລົງຊີວິດ | ໄລຍະດຳເນີນງານ | ຕະຫຼອດໄລຍະເວລາໂຄງການ |
| 1.8 | ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງດ້ານເສດຖະກິດ | ຜູ້ໄດ້ຮັບຜົນກະທົບ | ແຜນຟື້ນຟູການດຳລົງຊີວິດ | ໄລຍະດຳເນີນງານ | ຕະຫຼອດໄລຍະເວລາໂຄງການ |
| 2 | **ໂອກາດການຈ້າງງານ ແລະ ເສີມທັກສະ** | | | | ຕະຫຼອດໄລຍະເວລາໂຄງການ |
| 2.1 | ການຈ້າງງານໃນທ້ອງຖິ່ນ | ຜູ້ໄດ້ຮັບຜົນກະທົບ | ແຜນຟື້ນຟູການດຳລົງຊີວິດ | ໄລຍະກໍ່ສ້າງ ແລະ ດຳເນີນການ | ຕະຫຼອດໄລຍະເວລາໂຄງການ |

- ການຊົດເຊີຍຈະໄດ້ຮັບການຈັດຕັ້ງປະຕິບັດພາຍໃນເດືອນ ກັນຍາ-ທັນວາ ປີ 2022
- ແຜນການຟື້ນຟູຊີວິດການເປັນຢູ່ (LRPs) ຈະຖືກປະຕິບັດໃນລະຫວ່າງການກໍ່ສ້າງແລະການດຳເນີນງານ




FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT



## ສະພາບໂດຍລວມຂອງຜົນກະທົບ

- ແຜນການຄຸ້ມຄອງມໍລະດົກທາງວັດທະນະທຳ ຖືກສ້າງຂຶ້ນເພື່ອກຳນົດມາດຕະການແກ້ໄຂຜົນກະທົບທີ່ອາດເກີດຂຶ້ນໃນສະຖານທີ່ມໍລະດົກວັດທະນະທຳ, ໂຄງສ້າງ, ຄ່ານິຍົມ ທີ່ອາດຈະເປັນຜົນມາຈາກກິດຈະກຳຂອງໂຄງການ
- ມໍລະດົກທາງວັດທະນະທຳທີ່ເຫັນໄດ້ຈັດເຈນຢູ່ໃນພື້ນທີ່ປະກອບມີປ່າຊ້າ, ເຊິ່ງສ່ວນຫຼາຍແມ່ນເຂດປ່າໄມ້ ແລະ ບ່ອນຝັງສົບ ເຊິ່ງພື້ນທີ່ດັ່ງກ່າວແມ່ນຫ້າມບໍ່ໃຫ້ປະຊາຊົນບຸກລຸກຢ່າງເດັດຂາດ. ນອກຈາກນີ້ ຍັງມີເສົາຫຼັກຢູ່ກາງໝູ່ບ້ານໃຊ້ເພື່ອບູຊາ ແລະ ສັງເວີຍສັດ, ມີສາລາສັກສິດ ຫຼື ສາລາກ້ອມ ຢູ່ກາງໝູ່ບ້ານໃຊ້ເພື່ອສັງເວີຍສັດ ເຊິ່ງ ຫ້າມຜູ້ຍິງ ແລະ ຄົນພາຍນອກເຂົ້າໄປໃນສະຖານທີ່ນີ້ຢ່າງເດັດຂາດ
- ມໍລະດົກທາງວັດທະນະທຳທີ່ຈັບຕ້ອງບໍ່ໄດ້ຢູ່ໃນພື້ນທີ່ແມ່ນຕັ້ງຢູ່ເທິງພູກາງກີງ, ປ່າດັ່ງກ່າວເຊື່ອກັນວ່າເປັນບ່ອນຢູ່ອາໄສຂອງວິນຍານທີ່ເອີ້ນວ່າ ຜີບັງບົດ ເຊິ່ງສາມາດເຮັດອັນຕະລາຍໃຫ້ແກ່ຜູ້ທີ່ເຂົ້າໄປໃນປ່າໂດຍບໍ່ໄດ້ຮັບອະນຸຍາດ



FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT







## ມາດຕະການຫຼຸດຜ່ອນຜົນກະທົບ

- ປຶກສາຫາລືກັບພາກສ່ວນກ່ຽວຂ້ອງທີ່ອາດຈະໄດ້ຮັບຜົນກະທົບຈາກຄວາມເສຍຫາຍ ຫຼື ການເຄື່ອນຍ້າຍມໍລະດົກທາງວັດທະນະທໍາ ເພື່ອຂໍຄວາມຄິດເຫັນ
- ສ້າງປະຕິທິນຂອງງານບຸນ/ເຫດການຕ່າງໆ ແລະ ແຜນທີ່ຂອງສະຖານທີ່ມໍລະດົກວັດທະນະທໍາທີ່ຮູ້ຈັກເພື່ອຫຼີກເວັ້ນຜົນກະທົບຂອງໂຄງການທີ່ອາດຈະເກີດຂຶ້ນໃນລະຫວ່າງກິດຈະກໍາດັ່ງກ່າວ.
- ຮັບປະກັນວ່າສະຖານທີ່ມໍລະດົກວັດທະນະທໍາທີ່ຮູ້ຈັກໃນຂອບເຂດຂອງໂຄງການໄດ້ຖືກຍົກຍ້າຍໃນລັກສະນະທີ່ເໝາະສົມທາງດ້ານວັດທະນະທໍາກ່ອນການກໍ່ສ້າງ.
- ດໍາເນີນກອງປະຊຸມຍ່ອຍກ່ອນທີ່ຈະດໍາເນີນການກໍ່ສ້າງ.
- ສະໜອງຂໍ້ມູນ ແລະ ການຝຶກອົບຮົມໃຫ້ແກ່ພະນັກງານໂຄງການ ກ່ຽວກັບສະຖານທີ່ມໍລະດົກວັດທະນະທໍາອ້ອມຂ້າງ.
- ຮັບປະກັນວ່າຜູ້ຮັບຜິດຊອບໄດ້ຮັບຮູ້ເຖິງຂັ້ນຕອນການດໍາເນີນງານຢູ່ໃກ້ກັບສະຖານທີ່ມໍລະດົກວັດທະນະທໍາ ເພື່ອຫຼຸດຜ່ອນການແຊກແຊງເຂົ້າໃນແຫຼ່ງມໍລະດົກວັດທະນະທໍາດັ່ງກ່າວ
- ຮັບປະກັນວ່າຫຼັກຈັນຍາບັນຂອງພະນັກງານມີຄວາມຕື່ນຕົວຕໍ່ການຄວາມຮັບຮູ້ທາງວັດທະນະທໍາ ແລະ ຄວາມອ່ອນໄຫວ,
- ສືບຕໍ່ພົວພັນກັບພາກສ່ວນກ່ຽວຂ້ອງເພື່ອແຈ້ງການກ່ຽວກັບໄລຍະເວລາຂອງການກໍ່ສ້າງ ແລະ ຜົນກະທົບທີ່ອາດຈະເກີດຂຶ້ນ.
- ຈັດຕັ້ງປະຕິບັດ ແລະ ຮັກສາກົນໄກການຮ້ອງທຸກຂອງຊຸມຊົນ.
- ປະຕິບັດມາດຕະການຄຸ້ມຄອງທີ່ລະບຸໄວ້ໃນແຜນການຄຸ້ມຄອງ.
- ກໍານົດຂອບເຂດກັນຊົນ ຈາກສະຖານທີ່ມໍລະດົກວັດທະນະທໍາ ຖ້າຈໍາເປັນ

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ແຜນຈັດປະຕິບັດດ້ານຊີວະນານາພັນເບື້ອງຕົ້ນ

## ພາບລວມ ແລະ ຜົນກະທົບ

ແຜນຈັດປະຕິບັດດ້ານຊີວະນານາພັນ ໄດ້ຖືກກະກຽມເພື່ອກຳນົດການຈຶດເຊີຍ ແລະ ການຫຼຸດຜ່ອນ. ການຈຶດເຊີຍຄວາມຫຼາກຫຼາຍທາງດ້ານຊີວະນາໆພັນແມ່ນຜົນການອະນຸລັກທີ່ຖືກອອກແບບເພື່ອຈຶດເຊີຍຜົນກະທົບດ້ານຊີວະນາໆພັນທີ່ສຳຄັນ.

ຜົນກະທົບທີ່ຕົກຄ້າງທີ່ມີຄວາມສຳຄັນປານກາງເຊິ່ງກ່ຽວຂ້ອງກັບການສູນເສຍປ່າໄມ້ທີ່ຢູ່ເປັນແຫຼ່ງອາໄສສຳຄັນ. ຜົນກະທົບເຫຼົ່ານີ້ມີແນວໂນ້ມທີ່ຈະສົ່ງຜົນໃຫ້ການເກີດສູນເສຍຊີວະນາໆພັນ ເວັ້ນເສຍແຕ່ວ່າຈະໄດ້ຮັບການຫຼຸດຜ່ອນຢ່າງພຽງພໍໂດຍຜ່ານຍຸດທະສາດການຈຶດເຊີຍຊີວະນາໆພັນທີ່ເໝາະສົມ.

## ມີສ່ວນຮ່ວມກັບຜູ້ມີສ່ວນໄດ້ສ່ວນເສຍ

- ການປຶກສາຫາລືລວມມີບັນດາຜູ້ຊ່ຽວຊານທ້ອງຖິ່ນກ່ຽວກັບສັດລ້ຽງລູກດ້ວຍນົມ ແລະ ນົກຂອງລາວ, ເຂດຊີວະນາໆພັນຫຼັກ (KBAs), ສັດເລືອຄານ ແລະ ສັດທະເລໃນອາຊີຕາເວັນອອກສ່ຽງໃຕ້.
- ອົງການທີ່ບໍ່ຂຶ້ນກັບລັດຖະບານ NGOs
- ກຸ່ມຊຸມຊົນ
- ອົງການຈັດຕັ້ງຂອງລັດຖະບານ
- ບັນດາກະຊວງທີ່ກ່ຽວຂ້ອງທີ່ອາດຈະມີຄວາມສົນໃຈໃນໂຄງການໃນຂົງເຂດ



FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

# ແຜນຈັດປະຕິບັດດ້ານຊີວະນານາພັນເບື້ອງຕົ້ນ








## ຍຸດທະສາດການຊົດເຊີຍ




ເຂດຊົດເຊີຍ A: ໃກ້ກັບບ້ານດາກແຢູນ ແລະ ບ້ານດາກຢາງ: ຢູ່ໃນເຂດຊີວະນາໆພັນຫຼັກ ດັກຈຶງ (KBA). ເຂດນີ້ແມ່ນຖືກເລືອກຍ້ອນມີແຫຼ່ງທີ່ຢູ່ອາໄສແລະ ເປັນສະຖານທີ່ໃກ້ກັບເຂດປ່າທີ່ຖືກຜົນກະທົບ. ໂຄງການດັ່ງກ່າວອາດຈະສະໜັບສະໜູນເຄືອຂ່າຍເຂດປົກປັກຮັກສາທີ່ມີຢູ່ແລ້ວ ຫຼື KBAs ທ້ອງຖິ່ນ ຫຼື ເພື່ອສອດຄ່ອງກັບການລິເລີ່ມທີ່ມີຢູ່ແລ້ວ ຫຼື ພື້ນທີ່ ແລະ ການປະກອບສ່ວນໃຫ້ເຂົາເຈົ້າ. ຕົວຢ່າງສາມາດລວມເຖິງການເຮັດວຽກຮ່ວມກັບກະຊວງ
ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂອງ ເພື່ອ [illegible]
ການມາສູ່ລົບໂຄງການພະລັງງານລົມ ເພື່ອຮອງຮັບການ [illegible]

ເຂດຊົດເຊີຍ B: ໃກ້ບ້ານດາກໂດມ, ການຊົດເຊີຍການສູນເສຍປ່າດົງດິບ ບັນລຸໄດ້ດີທີ່ສຸດໂດຍການຕັ້ງພື້ນທີ່ຮັບການຊົດເຊີຍຕາມເສັ້ນທາງເຂົ້າເຖິງທີ່ມີຢູ່ຜ່ານປ່າດົງດິບ ໄປທາງທິດຕາເວັນອອກສ່ຽງເໜືອ ຕິດພັນກັບ ພູອາຍອນ KBA. ໂອກາດຢູ່ທີ່ນີ້ແມ່ນເພື່ອຟື້ນຟູທີ່ຢູ່ອາໄສຂອງປ່າໄມ້ຈຸດໂຊມທີ່ໄດ້ຮັບຜົນກະທົບ [illegible]

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

IEAD Impact Energy Asia Development

+856 20 98 947 318– Mr. Chaovalit Khunchaiyaphum, Area Director

chaovalit@ieadgroup.com

Ban Phon Kham, Lamam , Sekong, Group 1, No. 1

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT